

**ລາຍງານການເມືອງ**
**ຕໍ່ກອງປະຊຸມໃຫຍ່ ຄັ້ງທີ IX**
**ຂອງອົງຄະນະພັກແຂວງ ອັດຕະປື**
--------------

**ສະເໜີໂດຍ:** ສະຫາຍ ດຣ ຄໍາພັນ ພົມມະທັດ ກໍາມະການສູນກາງພັກ, ເລຂາພັກແຂວງ-ເຈົ້າແຂວງອັດຕະປື

ຮຽນ: ຄະນະປະທານກອງປະຊຸມໃຫຍ່ທີ່ເຄົາລົບ !

ຮຽນ: ສະຫາຍ ສົມສະຫວາດ ເລັ່ງສະຫວັດ ກໍາມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ຜູ້ປະຈໍາການລັດຖະບານ ແຫ່ງ ສປປ ລາວ ທີ່ເຄົາລົບຢ່າງສູງ!

ຮຽນ: ຜູ້ຕາງໜ້າເລຂາຄະນະພັກແຂວງຈໍາປາສັກ, ສາລະວັນ ແລະ ເຊກອງທີ່ນັບຖື !

ຮຽນ: ແຂກທີ່ມີກຽດແລະຜູ້ແທນກອງປະຊຸມໃຫຍ່ທີ່ຮັກແພງທັງຫຼາຍ

ຕາງໜ້າຄະນະບໍລິຫານງານພັກແຂວງ, ຂ້າພະເຈົ້າຂໍສະເໜີລາຍງານການເມືອງຕໍ່ກອງປະຊຸມໃຫຍ່ ຄັ້ງທີ **IX** ຂອງອົງຄະນະພັກແຂວງ ອັດຕະປື ເຊິ່ງປະກອບມີ **III** ພາກຄື:

- ພາກທີ **I:** ຕີລາຄາສະພາບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ **VIII** ຂອງອົງຄະນະພັກແຂວງ.
- ພາກທີ **II:** ທິດທາງໜ້າທີ່ຕົ້ນຕໍໃນການນໍາພາ-ຊີ້ນໍາການພັດທະນາເສດຖະກິດ-ສັງຄົມ ໃນໄລຍະແຕ່ປີ **2011-2015.**
- ພາກທີ **III:** ຍົກສູງຄວາມສາມາດນໍາພາຂອງອົງຄະນະພັກແຕ່ລະຂັ້ນ ແລະ ປັບປຸງ, ກໍ່ສ້າງພັກໃຫ້ເຂັ້ມແຂງ ແລະ ໜັກແໜ້ນ:

## ພາກທີ I
## ຕີລາຄາສະພາບການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງອົງຄະນະພັກແຂວງອັດຕະປື ໃນໄລຍະ 5 ປີ ( 2006-2010 )

ໃນໄລຍະ **5** ປີ ແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ **VIII** ເຖິງວ່າແຂວງອັດຕະປືໄດ້ປະສົບກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍປະການເຊັ່ນ: ໄພນໍ້າຖ້ວມ ແລະ ໄພແຫ້ງແລ້ງໄດ້ເກີດຂຶ້ນຢ່າງລຽນຕິດຮ້າຍແຮງ ສ້າງຜົນກະທົບໜັກໜ່ວງຕໍ່ພື້ນຖານເສດຖະກິດການດໍາລົງຊີວິດຂອງປະຊາຊົນທີ່ບໍ່ເຄີຍມີມາກ່ອນ; ໄດ້ຮັບຜົນກະທົບຫຼາຍດ້ານຈາກການປ່ຽນແປງອັນໄວວາຂອງລາຄາສະບຽງອາຫານ, ລາຄານໍ້າມັນເຊື້ອໄຟ, ລາຄາສິນຄ້າຈາກຜະລິດຕະພັນໄມ້ ແລະ ອື່ນໆ. ແຕ່ບົນພື້ນຖານຄວາມຕັດສິນໃຈສູ້ຊົນຂອງຄະນະພັກແຕ່ລະຂັ້ນ, ການຊີ້ນໍາ-ນໍາພາຂອງສູນກາງພັກ ແລະ ລັດຖະບານ, ຄວາມບຸກບືນຂອງປະຊາຊົນທົ່ວແຂວງ ບວກກັບການສະໜັບສະໜູນ ຊ່ວຍເຫຼືອຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ. ພວກເຮົາສາມາດຜ່ານຜ່າຂໍ້ຫຍຸ້ງຍາກ, ສິ່ງທ້າທາຍ-ທົດສອບເຫຼົ່ານັ້ນປະຕິບັດບັນດາທິດທາງຄາດໝາຍທີ່ມະຕິກອງປະຊຸມໃຫຍ່ ຄັ້ງທີ **VII** ວາງອອກໄດ້ເກີດຜົນເປັນຈິງ ເຊິ່ງສະແດງອອກໃນແຕ່ລະຂົງເຂດດັ່ງນີ້:

**1. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບສຸກ:**

ຄະນະພັກທຸກຂັ້ນ ໄດ້ເພີ່ມທະວີຄວາມຮັບຜິດຊອບຂອງຕົນປັບປຸງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບສຸກ. ໃນນັ້ນ ພວກເຮົາສາມາດຮັກສາສະຖຽນລະພາບທາງການເມືອງ ຢ່າງໜັກແໜ້ນ, ຮັກສາຜືນແຜ່ນດິນ, ຄວາມໝັ້ນຄົງຕາມຊາຍແດນ ແລະ ຄວາມສະຫງົບສຸກຂອງປະຊາຊົນໄດ້ໂດຍພື້ນຖານ; ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບສຸກ ໄດ້ຮັບການປັບປຸງດ້ານການຈັດຕັ້ງແຕ່ຂັ້ນແຂວງລົງຮອດຮາກຖານ, ມີສະຕິກຽມພ້ອມສູ້ຮົບ ແລະ ໄດ້ຮັບການຍົກລະດັບທາງດ້ານສິລະປະຍຸດຍຸດທະວິທີສູງຂຶ້ນກວ່າເກົ່າ. ພິເສດສາມາດປັກຫຼັກໝາຍຖີ່ກັບແຂວງກອນຕູມ ສສ ຫວຽດນາມ ສໍາເລັດ, ຕໍ່ພື້ນທີ່ຊາຍແດນລາວ-ກໍາປູເຈຍ ທີ່ລັດຖະບານທັງສອງຝ່າຍໄດ້ມີຄວາມພະຍາຍາມຢ່າງຕັ້ງໜ້າ ເພື່ອກ້າວໄປເຖິງການປັກຫຼັກໝາຍຢ່າງເປັນທາງການ ເຊິ່ງເຮັດໃຫ້ເຂດຊາຍແດນລະຫວ່າງສອງປະເທດມີຄວາມສະຫງົບ ແລະ ໝັ້ນຄົງ.

**2. ການພັດທະນາເສດຖະກິດ,ແກ້ໄຂຄວາມທຸກຍາກຂອງປະຊາຊົນ:**

ໂດຍລວມແລ້ວພື້ນຖານເສດຖະກິດ-ສັງຄົມ ຂອງແຂວງໄລຍະ **2006-2010** ໄດ້ສືບຕໍ່ຂະຫຍາຍຕົວໃນລະດັບຕໍ່ເນື່ອງ ລວມຍອດຜະລິດ ຕະພັນພາຍໃນໄດ້ເພີ່ມຂຶ້ນລື່ນຄາດໝາຍຂອງແຜນການສະເລ່ຍ **8,3%**/ປີ, (ຄາດ ໝາຍ **7,5-8%). ລວມ** ຍອດມູນຄ່າຜະລິດຕະພັນພາຍໃນບັນລຸໄດ້ **623** ຕື້ກີບ ລາຍຮັບສະເລ່ຍເພີ່ມຂຶ້ນຈາກ **241 USD** ຕໍ່ຄົນຕໍ່ປີ ໃນປີ **2005** ມາ ເປັນ **614USD** ຕໍ່ຄົນຕໍ່ປີ ຫຼື ເທົ່າກັບ **5** ລ້ານກີບ ໃນປີ **2010.** ອັນພົ້ນເດັ່ນໃນໄລຍະຫຼັງໆນີ້ ແມ່ນການລົງທຶນພາຍໃນ ແລະ ຕ່າງປະເທດ ໃນບັນດາຂົງເຂດທີ່ເປັນທ່າແຮງບົ່ມຊ້ອນ ໄດ້ຂະຫຍາຍຕົວດ້ວຍຖ່ວງທ່າໃໝ່. ພ້ອມກັນນັ້ນ ກໍ່ໄດ້ສຸມທຸກມາດຕາ ການໃນການພັດທະນາຊົນນະບົດ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນ, ສະພາບຄວາມທຸກຍາກ ຂອງປະຊາຊົນຫຼຸດລົງເທື່ອລະກ້າວ.

- **ດ້ານກະສິກຳ-ປ່າໄມ້:** ການຜະລິດກະສິກຳ-ປ່າໄມ້ ໄດ້ຫັນປ່ຽນ ຕາມທິດທີ່ຕັ້ງໜ້າ. ການປູກເຂົ້າ, ປູກພືດຜັກ ແລະ ການລ້ຽງສັດປະເພດຕ່າງໆ ຂອງປະຊາຊົນໄດ້ຮັບການສົ່ງເສີມ ແລະ ຂະຫຍາຍຕົວຕໍ່ເນື່ອງເນື້ອທີ່ນາເພີ່ມຂຶ້ນຈາກ **18.250** ຮຕ ມາເປັນ **21.460** ຮຕ, ໃນນີ້ ນາແຊງເພີ່ມຂຶ້ນຈາກ **375** ຮຕ ມາເປັນ **1.012** ຮຕ, ການລົງທຶນປູກຢາງພາລາ, ຕົ້ນໄມ້ອຸດສາ ຫະກຳດ້ວຍການລົງທຶນຈາກຕ່າງເທດ ພວມສ້າງການຫັນປ່ຽນພື້ນຖານດ້ານໂຄງປະກອບການຜະລິດກະສິກຳ-ປ່າໄມ້ ຢູ່ທ້ອງ ຖິ່ນ.

- **ວຽກງານການຄຸ້ມຄອງ ແລະ ພັດທະນາທີ່ດິນ:** ການຄຸ້ມຄອງທີ່ດິນໄດ້ຮັບການປັບປຸງ ແລະ ເພີ່ມທະວີການຄຸ້ມຄອງ-ບໍລິຫານເປັນຮູບປະທຳຫຼາຍຂົງເຂດຕາມລະບຽບກົດໝາຍ, ການຈັດສັນທີ່ດິນໄດ້ຮັບການຈັດຕັ້ງ ປະຕິບັດຢ່າງຕັ້ງໜ້າ, ລາຍຮັບ ຈາກທີ່ດິນນັບມື້ເພີ່ມຂຶ້ນ ແລະ ພວມກາຍເປັນໜຶ່ງຂອງແຫຼ່ງລາຍຮັບງົບປະມານທີ່ສຳຄັນຂອງແຂວງ.

- **ວຽກງານພະລັງງານ-ບໍ່ແຮ່:** ການສົ່ງເສີມການລົງທຶນໃນຂົງເຂດພະ ລັງງານ-ບໍ່ແຮ່ ທີ່ເປັນທ່າແຮງໄດ້ຮັບການເອົາໃຈໃສ່ ຢ່າງຕັ້ງໜ້າ. ການລົງທຶນເຂົ້າໃນໂຄງການຂະໜາດໃຫຍ່, ຂະໜາດກາງພວມໄດ້ຮັບການຈັດຕັ້ງປະຕິບັດ. ການພັດທະນາຕາຂ່າຍ ໄຟຟ້າໄປສູ່ຊົນນະບົດ ເພື່ອຮັບໃຊ້ການຜະລິດແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການຈັດຕ້ອງປະຕິບັດຢ່າງຕໍ່ເນື່ອງ ແລະ ກວ້າງຂວາງ. ມາຮອດປະຈຸບັນທຸກໃຈກາງຂອງຕົວເມືອງ, ຈຸດຊຸມຊົນສຳຄັນ, ເຂດຈຸດສຸມຕົ້ນຕໍໄດ້ມີຕາຂ່າຍໄຟຟ້າຖາ ວອນ.

- **ວຽກງານໂຍທາທິການ, ຂົນສົ່ງ ແລະ ໂທລະຄົມມະນາຄົມ:** ບັນດາເສັ້ນທາງສຳຄັນເຊັ່ນ: ເສັ້ນທາງອອກສູ່ຫວຽດນາມ, ທາງແຕ່ແຂວງຫາເມືອງ ກຸ່ມບ້ານຈຸດສຸມພັດທະນາ ແລະ ບ້ານສ່ວນໃຫຍ່ໄດ້ຮັບການກໍ່ສ້າງ ແລະ ຟື້ນຟູ, ເຮັດໃຫ້ການໄປມາ ຂົນສົ່ງໂດຍສານສະດວກກວ່າເກົ່າ. ການພັດທະນາຕົວເມືອງສາມັກຄີໄຊ ແລະ ໃຈກາງເມືອງຕ່າງໆ ໄດ້ເອົາໃຈໃສ່ຢ່າງສົມເຫດ ສົມຜົນ, ຕາໜ່າງການບໍລິການດ້ານໂທລະຄົມໄດ້ຄວບຄຸມພື້ນທີ່ສ່ວນໃຫຍ່ທົ່ວແຂວງ.

- **ດ້ານອຸດສະຫະກຳ-ການຄ້າ:** ບັນດາຫົວໜ່ວຍການຜະລິດອຸດສາ ຫະກຳຂະໜາດນ້ອຍ, ຂະໜາດກາງ ແລະ ຫັດຖະກຳ ໄດ້ຮັບການສົ່ງເສີມ ແລະ ຂະຫຍາຍຕົວຕໍ່ເນື່ອງ, ການດັດສົມໂຮງງານປຸງແຕ່ງໄມ້ພວມໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ, ສ້າງມູນຄ່າເພີ່ມຂຶ້ນປະມານ **10%**ຕໍ່ປີ, ສາມາດສະໜອງຜະລິດຕະພັນເພື່ອໃຊ້ສອຍຈຳເປັນພາຍໃນແຂວງ ແລະ ສົ່ງຂາຍຕ່າງ ແຂວງ ກໍ່ຄືຕ່າງປະເທດໄດ້ສ່ວນໜຶ່ງ, ການຈໍລະຈອນສິນຄ້າລະ ຫວ່າງຕົວເມືອງ ແລະ ຊົນນະບົດໄດ້ຂະຫຍາຍຕົວກວ້າງຂວາງ. ຢູ່ຈຸດຊຸມຊົນສຳຄັນມີຕະຫຼາດເກີດຂຶ້ນ, ສ້າງເງື່ອນໄຂໃຫ້ການຜະລິດສິນຄ້າ ແລະ ການແລກປ່ຽນຊື້-ຂາຍຢູ່ຊົນນະບົດປະກົດ ຕົວຂຶ້ນ.

- **ວຽກງານການເງິນ:** ການຂຸດຄົ້ນແຫຼ່ງລາຍຮັບຂອງທ້ອງຖິ່ນໄດ້ຮັບການເອົາໃຈໃສ່ ແລະ ເພີ່ມຂຶ້ນ**38,15%,** ສາມາດ ເກັບລາຍຮັບເກີນແຜນຕໍ່ເນື່ອງໃນລະດັບ**7,06%**ຕໍ່ປີ. ການຄຸ້ມຄອງລາຍຮັບ ລາຍຈ່າຍໄດ້ຮັບການປັບປຸງດີຂຶ້ນເປັນກ້າວໆ ຈຳ ກັດການຫົວໄຫຼຂອງງົບປະມານ ແລະ ສາມາດປະຕິບັດການເບີກຈ່າຍງົບປະມານ, ເງິນເດືອນ ແລະ ບໍລິຫານເປັນປົກກະຕິ. ປະຕິບັດການຫັນປ່ຽນການໃຊ້ຈ່າຍເງິນເດືອນຜ່ານລະບົບທະນາຄານ ໂດຍນຳໃຊ້ບັດ **ATM** ປະກອບສ່ວນສຳຄັນເຂົ້າໃນການ ປັບປຸງລະບົບບໍລິຫານມີຄວາມທັນສະໄໝເປັນກ້າວໆ. ພ້ອມກັນນັ້ນ, ແຂວງກໍ່ໄດ້ເອົາໃຈໃສ່ຢ່າງ ຕັ້ງໜ້າໃນການຂຸດຄົ້ນແຫຼ່ງ ລາຍຮັບທ້ອງຖິ່ນ ເພື່ອສຳລະໜີ້ສິນຕາມແຜນຂອງລັດຖະບານ.

ໄດ້ເອົາໃຈໃສ່ ສ້າງເງື່ອນໄຂໃຫ້ບັນດາສາຂາທະນາຄານທຸລະກິດ, ທະນາຄານນະໂຍບາຍໃນການລະດົມທຶນ ແລະ ປ່ອຍ ກູ້ ເຮັດໃຫ້ປະຊາຊົນສ່ວນໃຫຍ່ເຂົ້າເຖິງແຫຼ່ງເງິນກູ້ທະນາຄານໄດ້ສະດວກກວ່າເກົ່າ, ຍອດເງິນຝາກຂອງປະຊາຊົນ ແລະ ການ

ປ່ອຍກູ້ຂອງທະນາຄານໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ, ປະກອບສ່ວນສຳຄັນໃນການສະໜອງທຶນ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ສົ່ງເສີມການທ້ອນເງິນໃນສັງຄົມ.

- **ວຽກງານການທ່ອງທ່ຽວ**: ໄດ້ເອົາໃຈໃສ່ໃນການສຳຫຼວດ, ອອກແບບການພັດທະນາແຫຼ່ງທ່ອງທ່ຽວ ແລະ ຂົນຂວາຍຜູ້ປະກອບການ ພ້ອມທັງໂຄສະນາທ່ອງທ່ຽວດ້ານທຳມະຊາດ, ປະຫວັດສາດ ແລະວັດທະນະທຳ ເຮັດໃຫ້ຈຳນວນນັກທ່ອງທ່ຽວເພີ່ມຂຶ້ນ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ ຂະຫຍາຍຕົວໄວສາມາດຕອບສະໜອງການບໍລິການນັກທ່ອງທ່ຽວໄດ້ດີສົມຄວນ. ຮອດປີ **2010** ນັກທ່ອງທ່ຽວເຂົ້າມາປະມານ **37.625** ຄົນ, ສະເລ່ຍ ເພີ່ມຂຶ້ນ **28%**ຕໍ່ປີ.

- **ວຽກງານຄຸ້ມຄອງ ຊັບພະຍາກອນ ແລະ ສິ່ງແວດລ້ອມ:** ການພັດທະນາເສດຖະກິດ ໄດ້ໄປຄຽງຄູ່ກັບການເອົາໃຈໃສ່ໃນການນຳໃຊ້ຊັບພະຍາກອນໃຫ້ເກີດປະໂຫຍດສູງສຸດ ໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການປົກປັກຮັກສາ ແລະ ອະນຸລັກດ້ານສິ່ງແວດລ້ອມ ແລະ ສັງຄົມ, ສ້າງແຜນຍຸດທະສາດດ້ານຜົນກະທົບດ້ານສິ່ງແວດລ້ອມຂັ້ນແຂວງ, ເມືອງສຳເລັດໂດຍພື້ນຖານ, ການສຳຫຼວດ, ປະເມີນ ແລະ ຕິດຕາມຜົນກະທົບດ້ານສິ່ງແວດລ້ອມຂອງບັນດານັກລົງທຶນຢູ່ພາຍໃນແຂວງໄດ້ມີການຊີ້ນຳຢ່າງໃກ້ຊິດ.

3. **ການພັດທະນາຂົງເຂດສັງຄົມ:**

- **ວຽກງານສຶກສາ:** ມີບາດກ້າວຂະຫຍາຍຕົວໃໝ່, ໂຮງຮຽນແຕ່ຊັ້ນ ປະຖົມຮອດມັດທະຍົມຕົ້ນ-ປາຍເພີ່ມຂຶ້ນ **21,1%.** ໃນນັ້ນ, ສາມາດລຶບລ້າງບ້ານບໍ່ມີໂຮງຮຽນໄດ້**100%,** ຈຳນວນນັກຮຽນເພີ່ມຂຶ້ນ **35,1%.** ອັດຕາເຂົ້າ ຮຽນສຸດທິຊັ້ນປະຖົມເພີ່ມຂຶ້ນຈາກ **69,6%** ໃນປີ **2005** ມາເປັນ **87,3%** ໃນປີ **2010,** ໂຮງຮຽນເຕັກນິກວິ ຊາຊີບ ຂອງລັດ ແລະ ເອກະຊົນ ໄດ້ຮັບການສ້າງຕັ້ງຂຶ້ນ, ສາມາດ ຕອບສະໜອງການກໍ່ສ້າງພະນັກງານວິ ຊາຊີບລະດັບຊັ້ນກາງ, ຊັ້ນສູງ ແລະ ປະລິນຍາຕີ ໄດ້ຈຳນວນໜຶ່ງ. ພ້ອມກັນນັ້ນ,ກໍ່ໄດ້ກໍ່ສ້າງ-ບຳລຸງຍົກລະດັບວິຊາສະເພາະໃນ ຂົງເຂດຕ່າງໆຢູ່ພາຍໃນແລະຕ່າງປະເທດເປັນຈຳນວນຫຼວງຫຼາຍໂດຍສະເລ່ຍ **437** ຄົນຕໍ່ປີ.

- **ວຽກງານກິລາ-ກາຍຍະກຳ**: ກໍ່ໄດ້ຮັບການຊຸກຍູ້ສົ່ງເສີມ ແລະ ຂະຫຍາຍຕົວເປັນຂະບວນກວ້າງຂວາງ ສາມາດເຂົ້າຮ່ວມແຂ່ງຂັນລະດັບແຂວງ, ພາກ, ລະດັບຊາດ. ບາງປະເພດກິລາກໍ່ສາມາດເຂົ້າແຂ່ງຂັນໃນມະຫາກຳຊີເກມ. ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນຜົນສຳເລັດ ຂອງວຽກງານກິລາກາຍຍະກຳຂອງຊາດ.

- **ວຽກສາທາລະນະສຸກ:** ປະຊາຊົນໄດ້ເຂົ້າເຖິງການບໍລິການດ້ານສຸ ຂະພາບຫຼາຍຂຶ້ນ, ອັນເນື່ອງມາຈາກຕາໜ່າງສາທາລະນະສຸກຂະຫຍາຍຕົວຢ່າງທົ່ວເຖິງ, ພະນັກງານແພດໝໍໄດ້ແຈກຢາຍໄປເຖິງເຂດຊຸມຊົນ. ອັດຕາການຕາຍຂອງເດັກອາຍຸ **5** ປີລົງມາຫຼຸດລົງຈາກ **98** ຄົນ ຍັງເຫຼືອ **75** ຄົນ ຕໍ່ເດັກເກີດມີຊີວິດ **1.000** ຄົນ ແລະ ອັດຕາການຕາຍຂອງແມ່ຫຼຸດລົງຈາກ **405** ຄົນ ຍັງເຫຼືອ **300** ຄົນຕໍ່ເດັກເກີດມີຊີວິດ **100.000** ຄົນ. ອາຍຸຍືນສະເລ່ຍເພີ່ມຂຶ້ນຈາກ **55** ປີ ເປັນ **58** ປີ.

- **ວຽກງານຖະແຫຼງຂ່າວ-ວັດທະນະທຳ**: ວຽກງານຖະແຫຼງຂ່າວໄດ້ຮັບການປັບປຸງດີຂຶ້ນ, ການໂຄສະນາຜ່ານວິທະຍຸກວມ **50%** ແລະ ຜ່ານໂທລະພາບກວມ **70%** ຂອງພື້ນທີ່ທົ່ວແຂວງ. ມໍລະດົກດ້ານວັດທະນະທຳໄດ້ຮັບການປົກປັກຮັກສາ, ຮີດຄອງປະເພນີທີ່ເປັນເອກະລັກຂອງທ້ອງຖິ່ນ, ຂອງເຜົ່າ ພ້ອມທັງສິລະປະວັນນະຄະດີຂອງມະຫາຊົນໄດ້ຮັບການສົ່ງເສີມ, ການສ້າງຄອບຄົວ ແລະ ບ້ານວັດທະນະທຳກຳລັງໄດ້ຮັບການເອົາໃຈໃສ່ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ.

- **ວຽກງານແຮງງານ**, **ສະຫວັດດີການ-ສັງຄົມ ແລະ ວຽກງານກາແດງ:** ການປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານຕໍ່ການປະຕິວັດ ແລະ ພະ ນັກງານອາວຸໂສບຳນານໄດ້ຮັບການເອົາໃຈໃສ່ປະຕິບັດດ້ວຍຫຼາຍຮູບແບບ, ຫຼາຍລະດັບ. ການຝຶກອົບຮົມສີມືແຮງງານ ໄດ້ມີຜົນສຳເລັດໃນເບື້ອງຕົ້ນ, ວຽກເຮັດງານທຳໄດ້ເພີ່ມຂຶ້ນ ອັນເນື່ອງມາຈາກການຂະຫຍາຍຕົວຂອງບັນດາໂຄງການລົງທຶນພາຍໃນ ແລະ ຕ່າງປະເທດ; ການຊ່ວຍເຫຼືອຜູ້ທຸກຍາກ ແລະ ດ້ອຍໂອກາດໄດ້ຈັດຕັ້ງປະຕິບັດເປັນປົກກະຕິ ແລະ ຕັ້ງໜ້າກວ່າເກົ່າ. ການບັນເທົາທຸກໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກໄພພິບັດທຳມະຊາດ ໂດຍສະເພາະຈາກພະຍຸເກດສະໜາໄດ້ຮັບການປຸກລະດົມໃນທົ່ວສັງຄົມ.

- **ວຽກງານວິທະຍາສາດ ແລະ ເຕັກໂນໂລຊີ:** ໄດ້ສົ່ງເສີມການນຳໃຊ້ຜົນສຳເລັດດ້ານວິທະຍາສາດເຕັກໂນໂລຊີໃໝ່ ຕິດພັນກັບການ ປະກອບອຸປະກອນເຕັກນິກສື່ສານທີ່ທັນສະໄໝ ເຂົ້າໃນການຄຸ້ມຄອງບໍລິຫານລັດ, ໄດ້ເລີ່ມສ້າງລະບົບເຄືອຂ່າຍຄອມພິວເຕີ ເຊື່ອມໂຍງລະຫວ່າງຫ້ອງການຕ່າງໆ ອ້ອມຂ້າງແຂວງ, ແຂວງກັບເມືອງໃຈກາງຂອງແຂວງ. ອັນໄດ້ສ້າງ ເງື່ອນໄຂເພື່ອກ້າວໄປເຖິງການເຊື່ອມໂຍງເຄືອຂ່າຍລະຫວ່າງທ້ອງຖິ່ນກັບສູນກາງ.

4. **ການບູລະນະລະບົບການເມືອງ.**

- **ການບໍລິຫານລັດ:** ໄດ້ດຳເນີນການປັບປຸງພາລະບົດບາດ, ການກຳ ນົດຕຳແໜ່ງງານ, ການສັບຊ້ອນພະນັກງານ ຢູ່ຂັ້ນແຂວງ, ເມືອງໄດ້ສຳເລັດໂດຍພື້ນຖານ; ການປັບປຸງແບບແຜນວິທີເຮັດວຽກຕິດພັນກັບການແບ່ງງານ, ແບ່ງຄວາມຮັບຜິດຊອບ ແລະ ລະບອບປະສານງານ ທີ່ສອດຄ່ອງກັບບັນດາຫຼັກການ, ລະບຽບກົດໝາຍ ແລະ ສະພາບຕົວຈິງ ໄດ້ຮັບການຈັດຕັ້ງປະຕິບັດເປັນລະບົບຕໍ່ເນື່ອງ ເຮັດໃຫ້ຄຸນນະພາບການບໍລິຫານນັບມື້ສູງຂຶ້ນ.

- **ສານ, ໄອຍະການ ແລະພະແນກຍຸຕິທຳ:** ໄດ້ຮັບການບູລະນະດ້ານການຈັດຕັ້ງໃຫ້ສອດຄ່ອງກັບເງື່ອນໄຂໃໝ່ ແລະທິດຊີ້ນຳຂອງຄະນະປັບປຸງກົງຈັກຂັ້ນສູນກາງ, ການດຳເນີນການສືບສວນ, ສອບສວນ, ກ່າວຟ້ອງ, ການຕັດສິນຄະດີ ແລະຈັດຕັ້ງປະຕິບັດຄຳຕັດສິນຂອງສານໄດ້ດຳເນີນຕາມຂັ້ນຕອນຂອງລະບຽບກົດໝາຍ ແລະ ມີຄວາມໂປ່ງໃສ, ການໂຄສະນາເຜີຍ ແຜ່ກົດໝາຍ ໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີ ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ສະຕິເຄົາລົບ ແລະ ປະຕິບັດກົດໝາຍໄດ້ຮັບການຍົກສູງອີກກ້າວໜຶ່ງ.

- **ແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນ:** ໄດ້ຮັບການປັບປຸງດ້ານການຈັດຕັ້ງ ແລະ ມີຄວາມພະຍາຍາມເຄື່ອນໄຫວຕາມພາ ລະບົດບາດ ໜ້າທີ່ຂອງຕົນ, ໂຄສະນາສຶກສາອົບຮົມໃຫ້ສະມາຊິກ ແລະ ປະຊາຊົນບັນດາເຜົ່າມີຄວາມຕື່ນຕົວທາງການເມືອງ, ເຂົ້າຮ່ວມພາລະກິດປົກປັກຮັກສາ ແລະ ພັດທະນາທ້ອງຖິ່ນ ແລະ ເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນຂອງປະຊາຊົນບັນດາເຜົ່າ, ຊັ້ນຄົນ, ເພດໄວໃນສັງຄົມ.

5. **ວຽກງານພັກ-ພະນັກງານ.**

- **ວຽກງານການເມືອງ-ນຳພາແນວຄິດ:** ຄະນະພັກຂັ້ນຕ່າງໆ ໄດ້ເອົາ ໃຈໃສ່ຢ່າງຕັ້ງໜ້າໃນການເຜີຍແຜ່, ອະທິບາຍແນວທາງແຜນນະໂຍບາຍ ຂອງພັກໂດຍສະເພາະແມ່ນມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ, ບັນດາມະຕິ, ຄຳສັ່ງຂອງສູນກາງ ແລະຂອງອົງຄະນະພັກແຂວງເຮັດໃຫ້ພະນັກງານ, ສະມາຊິກພັກສ່ວນຫຼາຍເຊື່ອມຊຶມ ແລະ ເປັນເຈົ້າການໃນການຈັດຕັ້ງປະຕິບັດ. ພ້ອມກັນນັ້ນ, ກໍ່ໄດ້ເອົາໃຈໃສ່ຕິດຕາມການຜັນແປທາງດ້ານ ແນວຄິດຢູ່ພາຍໃນຖັນແຖວພະນັກງານ, ສະມາຊິກພັກ ແລະ ປະຊາຊົນ ແລ້ວຊີ້ແຈງອະທິບາຍ, ເຮັດໃຫ້ມີຄວາມເຂົ້າໃຈທີ່ເປັນເອກະພາບທາງດ້ານແນວ ຄິດສ້າງຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ, ການຄຸ້ມຄອງບໍລິຫານຂອງລັດດ້ວຍລະບຽບກົດໝາຍ.

- **ວຽກງານການຈັດຕັ້ງ ແລະ ການສ້າງພະນັກງານ:**

ຄະນະພັກຂັ້ນຕ່າງໆ ແຕ່ຂັ້ນແຂວງລົງຮອດຮາກຖານບ້ານໄດ້ຮັບການປັບປຸງນັບທັງການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກ. ໄດ້ ດາເນີນຊີວິດການເມືອງປົວແປງພາຍໃນພັກ ແລະ ກອງປະຊຸມໃຫຍ່ຂອງຄະນະພັກແຕ່ລະຂັ້ນໄດ້ສຳເລັດ. ການຂະຫຍາຍພັກ ກໍ່ໄດ້ຖືເອົາຄຸນນະພາບເປັນຫຼັກ ໂດຍຕິດພັນກັບຂະບວນການປະຕິວັດຂອງມະຫາຊົນ. ປະຈຸບັນທົ່ວແຂວງມີ **303** ໜ່ວຍພັກ, ທຽບໃສ່ປີ **2005** ເພີ່ມຂຶ້ນ **6,69%,** ສະມາ ຊິກພັກ **5.576** ສະຫາຍ ເພີ່ມຂຶ້ນ **44,19%.** ການສ້າງໜ່ວຍພັກແຂງ-ຮູ້ນຳພາຮອບດ້ານ **74** ໜ່ວຍ ເພີ່ມຂຶ້ນ **3** ເທົ່າຕົວ.

**ວຽກງານພະນັກງານ:** ຄະນະພັກຂັ້ນຕ່າງໆ ໄດ້ຖືເອົາວຽກງານພະນັກງານເປັນປັດໄຈຕັດສິນຜົນສຳເລັດຂອງພາລະກິດປ່ຽນແປງໃໝ່. ໃນຊຸມປີຜ່ານມາພວກເຮົາໄດ້ຟື້ນຟູໂຮງຮຽນທິດສະດີການເມືອງລະບົບຊັ້ນຕົ້ນ, ຊັ້ນກາງ ໂດຍໃຊ້ຫຼັກສູດໃໝ່ທີ່ເປັນເອກະພາບທົ່ວປະເທດ, ກໍ່ສ້າງ-ບຳລຸງຍົກລະດັບວິຊາສະເພາະ, ທິດສະດີການເມືອງ, ພາສາຕ່າງປະເທດຢູ່ພາຍໃນ ແລະ ຕ່າງປະເທດ ນັບແຕ່ຊັ້ນຕົ້ນ ຂຶ້ນຮອດປາລິນຍາໂທ, ເຮັດໃຫ້ຖັນແຖວພະນັກງານມີຄວາມເຕີບໃຫຍ່ນັບທັງດ້ານຈຳນວນ ແລະ ຄຸນນະພາບ. ປະຈຸບັນທົ່ວແຂວງ ມີພະນັກງານ **3.112** ຄົນ, ຍິງ **1.106** ຄົນ ທຽບໃສ່ປີ **2005** ເພີ່ມຂຶ້ນ **20,20%.**

- **ວຽກງານກວດກາພັກ-ລັດ**: ໂດຍປະຕິບັດຕາມທັດສະນະຂອງພັກ ຄະນະພັກຂັ້ນຕ່າງໆ ໄດ້ຖືການກວດກາເປັນວຽກສຳຄັນໃນການນຳພາຂອງພັກ. ຄະນະພັກທຸກຂັ້ນກໍ່ໄດ້ເອົາໃຈໃສ່ຊີ້ນຳ ແລະ ດຳເນີນການກວດກາເປັນປົກກະຕິ. ເປັນຕົ້ນແມ່ນກວດກາການເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດແນວທາງແຜນນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບຂອງພັກ; ກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ການລົງທຶນ ແລະແຜນງົບ ປະມານຂອງລັດ. ພ້ອມດຽວກັນນັ້ນ, ກໍ່ໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ແກ້ໄຂຜົນຂອງການກວດກາໃນແຕ່ລະໄລຍະໄດ້ດີກວ່າເກົ່າ.

- **ວຽກກໍ່ສ້າງຮາກຖານການເມືອງ-ພັດທະນາຊົນນະບົດຮອບດ້ານ:**

ຄະນະພັກ-ອຳນາດການປົກຄອງແຕ່ລະຂັ້ນໄດ້ຫັນພະນັກງານ ແລະ ທຶນຮອນຈຳນວນໜຶ່ງລົງປັບປຸງຮາກຖານ ເຊິ່ງເຮັດໃຫ້ການຈັດຕັ້ງພັກ-ອຳ ນາດການປົກຄອງ, ອົງການແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນໄດ້ຮັບການປັບປຸງຢ່າງເປັນລະບົບ. ການຜະລິດໄດ້ມີການຂະຫຍາຍຕົວ ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການຍົກສູງຂຶ້ນກວ່າເກົ່າ. ຄວາມ

ສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມໄດ້ຮັບການປັບປຸງດີຂຶ້ນ. ການຖາງປ່າເຮັດໄຮ່ປູກເຂົ້າໄດ້ຫຼຸດລົງ, ປະຊາຊົນມີອາຊີບຄົງທີ່ເພີ່ມຂຶ້ນ.

**6. ວຽກງານພົວພັນ ແລະ ຮ່ວມມືກັບຕ່າງປະເທດ.**

ອັນພົ້ນເດັ່ນແມ່ນພວກເຮົາ ໄດ້ເປີດກວ້າງການພົວພັນຮ່ວມມືຮອບດ້ານ ແລະ ຫຼາຍດ້ານກັບບັນດາແຂວງ, ນະຄອນຢູ່ພາກກາງ, ພາກໃຕ້ ສ.ສ ຫວຽດນາມ ສາມາດຍາດແຍ່ງດ້ານທຶນຮອນ ແລະ ການສະໜັບສະໜູນ ຈາກເພື່ອນມິດນັບມື້ເພີ່ມຂຶ້ນ. ພ້ອມນັ້ນ, ກໍ່ໄດ້ຕັ້ງໜ້າຂົນຂວາຍດຶງດູດການລົງທຶນຈາກຕ່າງປະເທດເຮັດໃຫ້ການລົງທຶນນັບມື້ນັບຫຼາຍ ແລະ ກວ້າງຂວາງ; ຍາດແຍ່ງການຊ່ວຍເຫຼືອຈາກບັນດາອົງການຈັດຕັ້ງສາກົນຢ່າງຕໍ່ເນື່ອງ, ປະກອບສ່ວນສຳຄັນໃນການປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ.

ສັງລວມແລ້ວ, ຜ່ານການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ **VIII** ຂອງອົງຄະນະພັກແຂວງ ແລະ ມະຕິກອງປະຊຸມໃຫຍ່ຄັ້ງທີ **IX** ຂອງພັກໄດ້ເຮັດໃຫ້ແຂວງອັດຕະປື ມີການຫັນປ່ຽນຢ່າງຕັ້ງໜ້າ. ຄະນະພັກພວກເຮົາເວລາໃດກໍ່ໄດ້ມີຄວາມຮັບຜິດຊອບຢ່າງສູງຕໍ່ໜ້າທີ່ການເມືອງຂອງຕົນ ເຊິ່ງສາມາດເຮັດໃຫ້ການເມືອງມີສະຖຽນລະພາບ ແລະ ຄວາມໝັ້ນຄົງ, ສັງ ຄົມມີຄວາມສະຫງົບສຸກ, ຍຸຕິທຳ, ເປັນລະບຽບຮຽບຮ້ອຍ ແລະ ປອດໄພ ກວ່າເກົ່າ. ລະບົບການເມືອງໄດ້ຮັບການປັບປຸງຢ່າງໜັກແໜ້ນ ແລະ ເຂັ້ມແຂງ. ອານາດການປົກຄອງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ກໍ່ໄດ້ຮັບການປັບປຸງ ແລະ ເສີມຂະຫຍາຍບົດບາດສູງຂຶ້ນ. ພື້ນຖານເສດຖະກິດໄດ້ຮັບການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊີວິດການເປັນຢູ່ຂອງປະຊາຊົນ ກໍ່ໄດ້ຮັບການປັບປຸງດີຂຶ້ນ, ຮີດຄອງປະເພນີອັນດີງາມ ກໍ່ໄດ້ອະນຸລັກຮັກສາ, ຄອບຄົວທຸກຍາກນັບມື້ນັບຫຼຸດລົງ, ຄອບຄົວຮັ່ງມີເພີ່ມຂຶ້ນພື້ນຖານໂຄງລ່າງທາງດ້ານເສດຖະກິດໄດ້ຮັບການພັດທະນາເທື່ອລະກ້າວ. ການສຶກສາ, ວັດທະນະທຳ, ສາທາລະນະສຸກ, ສະຫວັດດີການ-ສັງຄົມ ກໍ່ໄດ້ຮັບການປັບປຸງໃນລະດັບດີ ແລະ ຂໍ້ມູນຂ່າວສານກໍ່ໄດ້ກະຈາຍຢ່າງທົ່ວເຖິງ. ປະຊາຊົນບັນດາເຜົ່າເພີ່ມຄວາມເຊື່ອໝັ້ນຕໍ່ແນວທາງການນຳພາຂອງພັກ, ມີສະຕິເຄົາລົບລະບຽບ, ກົດໝາຍ ແລະ ມີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ. ການຮ່ວມມືພົວພັນກັບຕ່າງປະເທດ ໄດ້ເສີມຂະຫຍາຍຢ່າງຕັ້ງໜ້າຕາມຫຼັກການຂອງພັກ. ພະນັກງານ, ສະມາຊິກພັກ, ລັດຖະກອນ ແລະ ພື້ນຖານປະຊາຊົນ ກໍ່ໄດ້ຮັບການບຳລຸງກໍ່ສ້າງຕາມທິດຫັນ ໄປສູ່ອຸດສະຫະກຳທັນສະໄໝເທື່ອລະກ້າວ.

ຜົນສຳເລັດທີ່ຍາດມາໄດ້ນັ້ນ ແມ່ນຍ້ອນມີການຊີ້ນຳໆພາຢ່າງໃກ້ຊິດ ຂອງກົມການເມືອງສູນກາງພັກ, ລັດຖະບານ ແລະ ບັນດາກະຊວງທີ່ກ່ຽວຂ້ອງ. ການເຊີດຊູຄວາມຮັບຜິດຊອບຢ່າງຕັ້ງໜ້າຂອງຄະນະປະຈຳ, ຄະນະພັກແຂວງ, ຄະນະພັກທຸກຂັ້ນເປັນຫຼັກແຫຼ່ງຄັນທຸງນຳໜ້າໃນການຈັດຕັ້ງນຳ ພາຜັນຂະຫຍາຍມະຕິ, ຄຳສັ່ງຕ່າງໆ ຂອງສູນກາງ ກໍ່ຄືແຜນພັດທະນາເສດ ຖະກິດ-ສັງຄົມຄັ້ງທີ **6** ຂອງແຂວງ ແລະ ດ້ວຍຄວາມສາມັກຄີເປັນຈິດໜຶ່ງໃຈດຽວອັນເປັນປຶກແຜ່ນແໜ້ນໜາຂອງປະຊາຊົນບັນດາເຜົ່າ ບວກກັບການບໍລິຫານລັດທີ່ມີຄວາມຄ່ອງຕົວ. ພ້ອມກັນນັ້ນ, ກໍ່ຍ້ອນມີຊັບພະຍາກອນທຳມະຊາດທີ່ອຸດົມສົມບູນແລະໄດ້ຮັບການຮ່ວມມືຈາກພາຍໃນ ແລະ ຕ່າງປະເທດ. ເຊິ່ງເປັນທ່າແຮງບົ່ມຊ້ອນ, ເປັນເງື່ອນໄຂເອື້ອອຳນວຍໃຫ້ແກ່ການພັດທະນາ.

ນະໂອກາດອັນມີຄວາມໝາຍສຳຄັນນີ້, ກອງປະຊຸມໃຫຍ່ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບອົກຂອບໃຈເປັນຢ່າງສູງຕໍ່ກົມການເມືອງສູນກາງພັກທີ່ໄດ້ນຳເອົາຄວາມຫ່ວງໄຍມາສູ່ແຂວງອັດຕະປື ພວກຂ້າພະເຈົ້າຕະຫຼອດມາ, ຂໍສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈຕໍ່ບັນດາລັດຖະມົນຕີກະຊວງ, ທະບວງກົມຕ່າງໆ ກໍ່ຄືບັນດາ ແຂວງພາກໃຕ້ຂອງລາວຕະຫຼອດຮອດບັນດາແຂວງເພື່ອນມິດ ສ.ສ ຫວຽດນາມອ້າຍນ້ອງ ແລະ ບັນດາອົງການຈັດຕັ້ງສາກົນ ທີ່ໄດ້ຊ່ວຍເຫຼືອແຂວງອັດຕະປືພວກຂ້າພະເຈົ້າໄດ້ມີການພັດທະນາກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.

ກອງປະຊຸມໃຫຍ່ ຂໍສະແດງຄວາມຊົມເຊີຍຕໍ່ຄະນະພັກ, ສະມາຊິກພັກ, ພະນັກງານ, ລັດຖະກອນ, ນັກຮົບ, ປັນຍາຊົນ, ນັກທຸລະກິດຜູ້ປະກອບການ ແລະ ປະຊາຊົນບັນດາເຜົ່າທີ່ໄດ້ທຸ້ມເທສະຕິປັນຍາ, ເຫື່ອແຮງຂອງຕົນເຂົ້າໃນພາລະກິດດັ່ງກ່າວຕະຫຼອດ **5** ປີ ຜ່ານມາ.

ນະໂອກາດທີ່ມີຄວາມໝາຍສຳຄັນນີ້ ອີກເທື່ອໜຶ່ງ ຕາງໜ້າກອງປະຊຸມໃຫຍ່ຄັ້ງທີ **IX** ຂອງອົງຄະນະພັກແຂວງ, ຂ້າພະເຈົ້າເຊີນຊວນຜູ້ແທນ ແລະ ແຂກກອງປະຊຸມຊົມເຊີຍຜົນງານອັນໃຫຍ່ຫຼວງທີ່ຍາດມາໄດ້ນັ້ນຢ່າງ ສຸດອົກສຸດໃຈ (ຂໍຊົມເຊີຍ ).

**ບັນດາສະຫາຍຜູ້ແທນ ແລະ ແຂກຜູ້ມີກຽດທີ່ນັບຖື !**

ຄຽງຄູ່ກັບໝາກຜົນທີ່ຍາດມາໄດ້ນັ້ນ, ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ **VIII** ຍັງມີດ້ານອ່ອນ, ຂໍ້ຄົງຄ້າງຈຳນວນໜຶ່ງທີ່ຈະຕ້ອງສືບ ຕໍ່ແກ້ໄຂເປັນຕົ້ນ:

- ການຈັດຕັ້ງປະຕິບັດພາລະບົດບາດສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ, ບາງຄັ້ງຍັງບໍ່ທັນເດັດຂາດ ໂດຍສະເພາະແມ່ນ: ການແກ້ໄຂປະກົດການສໍ້ລາດບັງຫລວງ, ລັກລອບຂຸດຄົ້ນ-ຊື້ຂາຍຊັບພະຍາກອນ ທຳມະຊາດ, ລ່າສັດນໍ້າ-ສັດປ່າທີ່ຫວງຫ້າມ, ຄ້າຂາຍເຖື່ອນ, ການພະນັນ, ຢາເສບຕິດ, ຂີ້ລັກ-ງັດແງະ-ປຸ້ນຈີ້ຊັບ ພົນລະເມືອງ, ໂສເພນີ, ອຸປະຕິເຫດຕາມທ້ອງຖະໜົນ ແລະ ອື່ນໆ ຍັງມີລັກສະນະຊໍາເຮື້ອ, ແຕ່ບໍ່ໄດ້ຮັບການແກ້ໄຂຢ່າງທັນການ, ເຮັດໃຫ້ສັງຄົມມີຫາງສຽງວິພາກວິຈານອັນພາໃຫ້ມີຜົນກະທົບທາງລົບຕໍ່ບົດບາດການນໍາພາຂອງຄະນະພັກ.

- ການສ້າງກົນໄກ, ວາງແຜນຄຸ້ມຄອງ ແລະ ນຳໃຊ້ທຶນຂອງຕ່າງປະເທດຢູ່ບາງຂະແໜງການບໍ່ທັນມີປະສິດ ທິຜົນເທົ່າທີ່ຄວນ.

- ວຽກງານພັດທະນາເສດຖະກິດ-ສັງຄົມ ມີທ່ວງທ່າຂະຫຍາຍຕົວກໍ່ຕາມ ແຕ່ໃນຕົວຈິງ ການຜະລິດກະສິກຳໃຫ້ກາຍເປັນສິນຄ້າບໍ່ທັນມີອັນເປັນພື້ນຖານ, ກໍາລັງການຜະລິດເສດຖະກິດພາຍໃນບໍ່ທັນແຂງແຮງ, ສະພາບໜີ້ສິນຍັງຄຸມເຄືອ ອັນເນື່ອງມາຈາກການລົງທຶນລ່ວງໜ້າບໍ່ໄດ້ຮັບການແກ້ໄຂ, ການຄຸ້ມຄອງລາຍຮັບ-ລາຍຈ່າຍຍັງຫົ່ວໄຫຼ, ການຂຸດຄົ້ນທ່າແຮງກັບທີ່ຍັງບໍ່ທັນໄດ້ດີເທົ່າທີ່ຄວນ, ການຈັດສັນທີ່ດິນຍັງບໍ່ທັນຄ່ອງຕົວ ເຮັດໃຫ້ມີຊ່ອງຫວ່າງໃຫ້ບຸກຄົນຢຶດຈ່ອງ, ບຸກລຸກຕາມລໍາພັງໃຈພາໃຫ້ເກີດມີຂໍ້ຂັດແຍ່ງຫຼາຍຂຶ້ນ. ການຄຸ້ມຄອງການຮຽນ-ການສອນລະຫວ່າງໂຮງຮຽນ, ສັງຄົມ, ຄອບຄົວບໍ່ທັນໜັກແໜ້ນເຮັດໃຫ້ຄຸນນະພາບການສຶກສາບໍ່ສົມຄູ່ກັບການລົງທຶນ, ການໂພສະນາການດ້ານການຮັກສາສຸຂະພາບ, ຈັນຍາບັນ ແລະ ເຕັກນິກວິຊາການຂອງແພດໝໍຍັງບໍ່ທັນສະໜອງກັບຄວາມຮຽກຮ້ອງຕ້ອງການ. ການຄຸ້ມຄອງແຮງງານພາຍໃນ ແລະ ຕ່າງປະເທດບໍ່ທັນຮັດກຸ່ມ, ການປະຕິບັດດ້ານສະຫວັດດີການ-ສັງຄົມຕໍ່ພະນັກງານ, ລັດຖະກອນ, ອາວຸໂສ-ບໍານານຍັງຊັກຊ້າ ແລະ ມີອັນບໍ່ໄປຕາມນະໂຍບາຍ. ການສະໜອງຂໍ້ມູນຂ່າວສານ, ການອະນຸລັກສິ່ງເສີມວັດທະນະທໍາ-ຮີດຄອງປະເພນີອັນດີງາມ, ການສ້າງຄອບຄົວ-ບ້ານວັດທະນະທໍາຍັງເຮັດໄດ້ໜ້ອຍ.

- ການຜັນຂະຫຍາຍເຊື່ອມຊຶມ ແລະ ກໍາແໜ້ນລະບຽບກົດໝາຍຕ່າງໆ ຂອງທົ່ວປວງຊົນບໍ່ທັນເຖິງຖອງ ແລະ ໜັກແໜ້ນເທົ່າທີ່ຄວນ. ລະບົບການຈັດຕັ້ງໃນຂົງເຂດປົກປ້ອງກົດໝາຍຍັງບໍ່ທັນເຂັ້ມແຂງ.

- ຄວາມຮັບຜິດຊອບຂອງຄະນະພັກແຕ່ລະຂັ້ນໃນການຫັນມະຕິເປັນໂຄງການລະອຽດ ແລະ ການເຄື່ອນໄຫວກໍ່ສ້າງໜ່ວຍພັກແຂງ-ຮູ້ນໍາພາຮອບດ້ານ, ການປະຕິບັດລະບຽບຂອງພັກ, ຄວາມເປັນເອກະພາບພາຍໃນພັກ, ການຂະຫຍາຍພັກ, ການປັບປຸງພັກໃຫ້ມີຄວາມປອດໃສເຂັ້ມແຂງຍັງບໍ່ທັນຫັນປ່ຽນຢ່າງຈະແຈ້ງ, ພະນັກງານ, ສະມາຊິກພັກຈຳນວນໜຶ່ງເຊື່ອມຖອຍດ້ານຄຸນສົມບັດ, ຄວາມຮັບຜິດຊອບບໍ່ທັນສູງ, ການດໍາລົງຊີວິດ, ຫຼິ້ນ ກິນຟູມເຟືອຍ, ປະກົດການສວຍໂອກາດສໍ້ລາດບັງຫຼວງມີລັກສະນະແຜ່ຫຼາຍ. ການສຶກສາອົບຮົມການເມືອງ-ນໍາພາແນວຄິດ, ວິທີຈັດຕັ້ງດໍາເນີນຊີວິດການເມືອງພາຍໃນອົງຄະນະພັກ ແລະ ສະມາຊິກພັກຍັງຂາດການຕໍ່ສູ້ພາຍໃນ, ການປັບປຸງກົງຈັກບໍ່ຄອຍຄ່ອງຕົວ. ການເຄື່ອນໄຫວຂອງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນບໍ່ທັນເຕັມພາລະບົດບາດ. ການຫັນລົງກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ ແລະ ລົບລ້າງຄວາມທຸກຍາກ ກໍ່ຄືການນຳເອົາແນວທາງນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ລະບຽບກົດໝາຍ, ມະຕິຄໍາສັ່ງຕ່າງໆ ໃຫ້ກາຍເປັນພຶດຕິກໍາຕົວຈິງຍັງບໍ່ທັນໄດ້ຕາມລະດັບຄາດໝາຍ, ຄວາມສາມາດຂອງຜູ້ນໍາພາ-ຄຸ້ມຄອງ, ວິຊາການ ແລະ ຜູ້ບໍລິຫານໃນກົງຈັກບາງຂະແໜງການຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານບໍ່ທັນໄດ້ດີ, ການລົງທຶນເຂົ້າໃນການພັດທະນາ ແລະ ການມີສ່ວນຮ່ວມຂອງປະຊາຊົນຍັງຖືກຈຳກັດ.

**ບັນດາສະຫາຍຜູ້ແທນ ແລະ ແຂກທີ່ມີກຽດທັງຫຼາຍ !**

ຂໍ້ຄົງຄ້າງຕ່າງໆທີ່ກ່າວມາຂ້າງເທິງນັ້ນເກີດມາຈາກຫຼາຍສາເຫດຕ່າງກັນ, ແຕ່ສາເຫດຕົ້ນຕໍແມ່ນ: ຍ້ອນການກໍ່ສ້າງພັກ-ພະນັກງານ ໂດຍສະເພາະແມ່ນການສຶກສາອົບຮົມການເມືອງ-ນໍາພາແນວຄິດຍັງບໍ່ທັນເລິກເຊິ່ງເຖິງຖອງ; ບໍ່ທັນຖືກຈຸດພິເສດຂອງແຕ່ລະເປົ້າໝາຍ. ຄວາມຮັບຜິດຊອບການເມືອງ, ຄວາມຕື່ນຕົວເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງຂອງພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າ ຈໍານວນໜຶ່ງຍັງຢູ່ໃນແນວຄິດເກົ່າຄອງເດີມ, ຄວາມສາມາດກ້າຫານຮັບເອົາ ແລະ ຜັນປ່ຽນໄປຕາມແນວທາງປ່ຽນ ແປງໃໝ່ຂອງພັກຍັງຊັກຊ້າ. ການສ້າງແຜນການ, ໂຄງການລະອຽດຍັງບໍ່ທັນຕິດພັນກັບການສ້າງແຫຼ່ງລາຍຮັບງົບປະມານຕົວຈິງ, ອີງໃສ່ແຕ່ການລົງທຶນລ່ວງໜ້າຂອງບັນດາບໍລິສັດເອກະຊົນ ທີ່ບໍ່ມີຈຸດສຸມ, ສ້າງຫຼາຍໂຄງການແຕ່ທຶນຊໍາລະສະສາງຍັງບໍ່ທັນຕອບສະໜອງໄດ້, ເຮັດໃຫ້ມີໜີ້ສິນຄຸມເຄືອເພີ່ມຂຶ້ນ, ການຄຸ້ມຄອງການ

ເກັບລາຍຮັບມີບາງອັນຍັງບໍ່ທັນໄປຕາມກົດໝາຍງົບປະມານ ແລະ ນຳໃຊ້ບັນດາທ່າແຮງບົ່ມຊ້ອນ ເຂົ້າໃນການຈັດຕັ້ງປະຕິບັດວຽກງານຕ່າງໆບໍ່ທັນໄດ້ດີ. ຍ້ອນຜົນກະທົບຈາກທຳມະຊາດຢ່າງຕໍ່ເນື່ອງ ເຮັດໃຫ້ຜົນຜະລິດຂອງປະຊາຊົນຫຼຸດລົງ, ເກີດມີພະຍາດລະບາດຕ່າງໆຮ້າຍແຮງແຕ່ການສະກັດກັ້ນ ແລະ ແກ້ໄຂຍັງບໍ່ທ່ວງທັນ ໂດຍສະເພາະແມ່ນເຂດຫ່າງໄກສອກຫຼີກຈຳນວນໜຶ່ງຄວາມສ່ຽງຍັງກວມອັດຕາສ່ວນສູງ. ພ້ອມກັນນັ້ນສັດຕູ ແລະ ຄົນບໍ່ດີກໍ່ກຳເອົາກາລະໂອກາດດັ່ງກ່າວເຄື່ອນໄຫວໂຄສະນາດ້ວຍຫຼາຍຮູບຫຼາຍສີ ເປັນຕົ້ນແມ່ນໃຊ້ບັນຫາຊົນເຜົ່າ-ສິດທິມະນຸດ, ສາສະໜາ ແລະ ຄວາມທຸກຍາກຂອງປະຊາຊົນເຮົາໃນປະຈຸບັນ ເພື່ອຫຍຸບຍອບບົດບາດການນຳພາຂອງພັກ ແລະ ຄວາມສາມັກຄີປອງດອງລະຫວ່າງເຜົ່າ.

**ຈາກພຶດຕິກຳຕົວຈິງ ແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງອົງຄະນະພັກແຂວງ ອັດຕະປື ໃນ 5 ປີ ຜ່ານມາ ສາມາດສະ ຫຼຸບໄດ້ດັ່ງນີ້:**

- ຕ້ອງເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ, ຄວາມຮັບຜິດຊອບໃນການຊີ້ນຳໆ ພາຂອງຄະນະພັກຂັ້ນຕ່າງໆ; ເປັນແບບຢ່າງນຳໜ້າໃນທຸກໜ້າທີ່ວຽກງານ, ເອົາໃຈໃສ່ເຮັດວຽກງານສຶກສາອົບຮົມການເມືອງ, ນຳພາແນວຄິດໃຫ້ຖັນແຖວພະນັກງານ, ສະມາຊິກພັກ ແລະ ປະຊາ ຊົນບັນດາເຜົ່າໃຫ້ເລິກເຊິ່ງ ເປັນລະບົບ ປົກກະຕິ.

- ບັນດາສະຫາຍໃນຄະນະພັກ, ຕ້ອງຍົກສູງຄວາມຮັບຜິດຊອບຕໍ່ ໜ້າທີ່ການເມືອງຂອງຕົນ, ຈັດຕັ້ງປະຕິບັດຫຼັກການລວມສູນປະຊາທິປະໄຕຂອງພັກຢ່າງເຂັ້ມງວດ, ປະຕິບັດລະບອບແບບແຜນນຳພາ ແລະ ວິທີເຮັດວຽກໃຫ້ສອດຄ່ອງທັງປະດິດສ້າງຕາມຫຼັກການຂອງພັກ.

- ຄະນະພັກທຸກຂັ້ນຕ້ອງປະຕິບັດລະບອບດຳເນີນຊີວິດການເມືອງ ເປັນປົກກະຕິ, ປັບປຸງລະບອບການຊີ້ ນຳໆພາຕິດພັນກັບການຫັນລົງກໍ່ສ້າງ ຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ, ເປັນເຈົ້າການ ນຳພາການຜະລິດ ເປັນສິນຄ້າ ແລະ ແກ້ໄຂຄວາມທຸກຍາກຂອງ ປະຊາຊົນໃຫ້ບັນລຸຕາມແຜນການທີ່ໄດ້ກຳນົດໄວ້; ສ້າງໃຫ້ໄດ້ໜ່ວຍພັກແຂງ-ຮູ້ນຳພາຮອບດ້ານກັບການສ້າງບ້ານ ແລະ ກຸ່ມບ້ານພັດທະນາຕາມ **4** ຄາດ ໝາຍ **4** ເນື້ອໃນ.

- ສູ້ຊົນປະຕິບັດ ແຜນກຳນົດໃນການບຳລຸງຍົກລະດັບຄວາມຮູ້ ຄວາມສາມາດດ້ານຕ່າງໆໃຫ້ແກ່ພະນັກງານນຳພາ-ຄຸ້ມຄອງ, ພະນັກງານວິຊາການ ເພື່ອແນໃສ່ຕອບສະໜອງຄວາມຮຽກຮ້ອງ ຕ້ອງການອັນຈຳເປັນ ແລະ ເລັ່ງດ່ວນຂອງໜ້າທີ່ວຽກງານທີ່ກອງປະຊຸມໃຫຍ່ຄັ້ງນີ້ໄດ້ຮັບຮອງ.

- ຕ້ອງນຳໃຊ້ທຸກພາກສ່ວນເສດຖະກິດນັບທັງພາຍໃນ ແລະ ຕ່າງປະເທດເຂົ້າໃນການພັດທະນາເສດຖະ ກິດ-ສັງຄົມ ແນໃສ່ຍູ້ການຜະລິດເປັນສິນຄ້າໃຫ້ຂະຫຍາຍຕົວ, ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ໂດຍມີການຈັດຕັ້ງ ແລະ ການຄຸ້ມຄອງທີ່ມີປະສິດທິຜົນ.

## ພາກທີ II
## ທິດທາງໜ້າທີ່ຕົ້ນຕໍໃນການນຳພາ-ຊີ້ນຳການພັດທະນາ
## ເສດຖະກິດ-ສັງຄົມ ໃນໄລຍະແຕ່ປີ 2011-2015.

ຖືສຳຄັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບໄປພ້ອມກັບການ ຂຸດຄົ້ນທຸກຄວາມອາສາມາດບົ່ມຊ້ອນ, ເສີມຂະຫຍາຍທຸກກຳລັງແຮງທີ່ມີ, ຍູ້ການພັດທະນາເສດຖະກິດ-ສັງຄົມມີການຂະຫຍາຍຕົວໄວ ແລະ ໝັກແໜ້ນ; ສ້າງການຫັນປ່ຽນໃຫ້ມີລັກສະນະບຸກທະລຸໃນດ້ານແບບແຜນວິທີນຳພາ ແລະ ກົນໄກຄຸ້ມຄອງເສດຖະກິດ-ສັງຄົມ, ສົ່ງເສີມການລົງທຶນຢ່າງສຸດຂີດ ແລະ ກະຕຸ້ນການສູ້ຊົນບົນຕົວຂອງທົ່ວສັງຄົມ, ເຮັດໃຫ້ແຂວງອັດຕະປື ສາມາດແກ້ໄຂຄວາມທຸກຍາກ ໂດຍພື້ນຖານ; ກາຍເປັນແຂວງທີ່ມີຖານການຜະລິດກະສິກຳ-ປ່າໄມ້, ອຸດສາຫະກຳທີ່ສຳຄັນ, ການບໍລິການຜ່ານ ແລະ ການທ່ອງທ່ຽວມີການຂະຫຍາຍຕົວຢ່າງແຂງແຮງ, ວັດທະນະທຳສັງຄົມໄດ້ຮັບການພັດທະນາໃນລະດັບດີ, ສະໝໍ່າສະເໝີ ແລະ ຍຸຕິທຳ, ກາຍເປັນຈຸດການລົງທຶນ ແລະ ການພັດທະນາທີ່ສຳຄັນໃນເຂດສາມຫຼ່ຽມພັດທະນາ ລາວ, ຫວຽດນາມ, ກຳປູເຈຍ (**CLV**).

**ກ. ທ່າແຮງບົ່ມຊ້ອນ, ກາລະໂອກາດ ແລະ ສິ່ງທ້າທາຍ.**

**+ ທ່າແຮງບົ່ມຊ້ອນທີ່ສາມາດຂຸດຄົ້ນ ເພື່ອການພັດທະນາ:**

ແຂວງອັດຕະປື ເປັນແຂວງທີ່ມີເນື້ອທີ່ທຳການຜະລິດດ້ານກະສິກຳອັນກວ້າງຂວາງ ສາມາດກາຍເປັນເຂດຜະລິດເຂົ້າທີ່ສຳຄັນມີເຂດພື້ນທີ່ຄ້ອຍຊັນຕ່ຳ ທີ່ເຊື່ອມຕໍ່ລະຫວ່າງເຂດທົ່ງພຽງ ແລະ ພູດອຍເໝາະສົມກັບການຂະຫຍາຍເນື້ອທີ່ປູກໄມ້ ແລະ ພືດອຸດສາຫະກຳ, ມີເຂດພູພຽງ ແລະ ພູດອຍທີ່ສາມາດປູກກາເຟ, ພືດຜັກເຂດໜາວ. ໃນທຸກເຂດລ້ວນແຕ່ມີຄວາມເໝາະສົມໃນການປູກຕົ້ນໄມ້ໃຫ້ໝາກຫຼາກຫຼາຍຊະນິດ, ການລ້ຽງ ສັດນ້ອຍໃຫຍ່ເປັນຟາມ ແລະ ລ້ຽງປາ.

ປ່າໄມ້ທີ່ຍັງປົກຫຸ້ມພື້ນທີ່ສ່ວນໃຫຍ່ຂອງແຂວງ ແລະ ຍັງຄົງຄວາມອຸດົມສົມບູນສາມາດກຳນົດ ແລະພັດທະນາເປັນເຂດອະນຸລັກພຶກສາສາດ ແລະ ສັດນ້ຳ, ສັດປ່າ ເພື່ອການສຶກສາຮຽນຮູ້ ຈາກພາຍໃນ ແລະ ຕ່າງປະເທດ ຕິດພັນກັບການທ່ອງທ່ຽວທຳມະຊາດທີ່ສຳຄັນ ແລະ ຫາຍາກ.

ແມ່ນ້ຳຫຼາຍສາຍທີ່ສຳຄັນ ໄດ້ກາຍເປັນເງື່ອນໄຂທຳມະຊາດທີ່ເອື້ອອຳນວຍ ສຳລັບການພັດທະນາບັນດາໂຄງການຊົນລະປະທານຂະໜາດກາງ, ຂະໜາດໃຫຍ່ ແລະ ໄດ້ກາຍເປັນໜຶ່ງໃນຈຸດສຳຄັນສຳລັບພັດທະນາພະລັງໄຟຟ້າ,ໄຟຟ້າພະລັງງານນ້ຳທີ່ເປັນພະລັງງານສະອາດ.

ແຂວງອັດຕະປື ຍັງເປັນເຂດທີ່ມີແຫຼ່ງແຮ່ທາດມີຄ່າທາງດ້ານເສດຖະກິດ ເຊິ່ງໄດ້ ແລະພວມກາຍເປັນຈຸດສຳຄັນດຶງດູດການລົງທຶນ ແລະສາມາດ ກາຍເປັນພື້ນຖານໃຫ້ແກ່ການຂະຫຍາຍ ອຸດສາຫະກຳຂຸດຄົ້ນ-ປຸງແຕ່ງແຮ່ທາດ ແລະ ຈະກາຍເປັນຖານສຳຄັນ ຂອງຂະແໜງອຸດສາຫະກຳຢູ່ທ້ອງຖິ່ນໃນອະນາຄົດອັນໃກ້.

+ **ໂອກາດ ແລະ ເງື່ອນໄຂທີ່ເອື້ອອຳນວຍ:** ກຳລັງແຮງສັງລວມຂອງຊາດເຮົາ ໄດ້ຮັບການເພີ່ມທະວີຍິ່ງກວ່າເວລາໃດແຜນນະໂຍບາຍ ແລະ ກົນໄກຄຸ້ມຄອງເສດຖະກິດ-ສັງຄົມ ໄດ້ຮັບການບູລະນະໃຫ້ນັບມື້ເຂັ້ມແຂງ, ນະໂຍບາຍ ສິ່ງເສີມພິເສດຕໍ່ເຂດສາມຫຼ່ຽມພັດທະນາລາວ-ຫວຽດນາມ-ກຳປູເຈຍ ບວກກັບທີ່ຕັ້ງຂອງແຂວງອັດຕະປື ຢູ່ແລວເສດຖະກິດຕາເວັນອອກ-ຕາເວັນຕົກ,...ໄດ້ເປີດໂອກາດ ແລະ ເງື່ອນໄຂໃຫ້ທ້ອງຖິ່ນພວກເຮົາເປັນເຈົ້າການຂຸດຄົ້ນຄວາມສາມາດບົ່ມຊ້ອນ ດ້ານຊັບພະຍາກອນທຳມະຊາດ ດ້ວຍການດູດດຶງທຶນຮອນ ແລະ ເຕັກນິກ ຈາກພາຍໃນ ແລະ ຕ່າງປະເທດ ພ້ອມທັງສາມາດເຊື່ອມໂຍງຕະຫຼາດພາຍໃນ ແລະ ກັບຕ່າງປະເທດ.

ສະພາບທາງການເມືອງ, ສັງຄົມມີຄວາມສະຫງົບ ປະຊາຊົນບັນດາເຜົ່າ ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ ຈຶ່ງສາມາດປຸກລະດົມເຕົ້າໂຮມ ແລະ ເສີມຂະຫຍາຍກຳລັງແຮງຂອງທົ່ວສັງຄົມເຂົ້າໃນການພັດທະນາທ້ອງຖິ່ນ.

ຖັນແຖວພະນັກງານ ທີ່ໄດ້ຮັບການບຳລຸງສ້າງຢ່າງຫຼວງຫຼາຍ ແລະ ຜົນສຳເລັດຕົວຈິງ ໃນດ້ານຕ່າງໆ ຂອງການພັດທະນາຊຸມປີຜ່ານມາ, ບວກກັບບົດຮຽນໃນການຊີ້ນຳ-ນຳພາຕົວຈິງ ໃນການພັດທະນາເສດຖະກິດ-ສັງຄົມ ໄດ້ກາຍເປັນກຳລັງຕົວຈິງ ແລະ ເປັນປັດໄຈສຳຄັນແກ່ການຈັດຕັ້ງປະ ຕິບັດບັນດາທິດທາງ, ແຜນການ ແລະ ໂຄງການພັດທະນາຕ່າງໆ ໃນຊຸມປີຕໍ່ໜ້າ.

+ **ຄວາມຫຍຸ້ງຍາກ, ສິ່ງທ້າທາຍ ແລະ ຄວາມອາດສາມາດໃນການແກ້ໄຂຜ່ານຜ່າ.**

ຜົນກະທົບຈາກວິກິດການດ້ານເສດຖະກິດ-ການເງິນຂອງໂລກ, ພາກພື້ນ, ບັນຫາໂລກລະບາດ, ໄພພິບັດທີ່ເກີດຂຶ້ນຈາກການປ່ຽນແປງຂອງດິນຟ້າອາກາດ, ໄດ້ສ້າງຄວາມບໍ່ແນ່ນອນສຳລັບການປູກຝັງ, ລ້ຽງສັດ, ການດຳລົງຊີວິດອັນປົກກະຕິຂອງປະຊາຊົນ ແລະເປັນປັດໄຈສ່ຽງສຳລັບການ ຈັດຕັ້ງປະຕິບັດແຜນພັດທະນາຕ່າງໆໃນທຸກລະດັບ.

ລະດັບການຜະລິດກະສິກຳ-ປ່າໄມ້ ຂອງປະຊາຊົນຍັງຕ່ຳ ຂຶ້ນກັບທຳມະຊາດ ພື້ນຖານອຸດສາຫະກຳ, ກະສິກຳບໍ່ທັນເປັນຕົ້ນເປັນໂຕພໍເທົ່າໃດ, ຖານຂອງການປະກອບການ ຂະໜາດນ້ອຍ, ຂະໜາດກາງໃນສັງຄົມຍັງອ່ອນແອ, ຄຸນນະພາບຂອງບຸກຄະລາກອນຍັງຕ່ຳ ແລະ ປະສິດທິພາບຂອງການບໍລິຫານລັດຍັງບໍ່ທັນສູງ. ໃນຂະນະດຽວກັນພັດມີການເລັ່ງທວງຢ່າງພາວະວິໃສໃຫ້ມີການພັດທະນາແບບກ້າວກະໂດດ.

ລະດັບການສຶກສາທົ່ວໄປຂອງປະຊາຊົນຍັງຕ່ຳ, ກຳລັງແຮງງານທີ່ມີສີມືຍັງມີໜ້ອຍ, ຄວາມທົນທານດ້ານຮ່າງກາຍ ແລະ ວິໄນການອອກແຮງງານຍັງບໍ່ທັນສູງ ຈຶ່ງເປັນຂໍ້ຈຳກັດໃນການຫາວຽກເຮັດງານທຳ ໃນຕຳແໜ່ງ ງານທີ່ສຳຄັນ ແລະ ມີລາຍຮັບດີທັງເຮັດໃຫ້ຄວາມສາມາດແຂ່ງຂັນກັບແຮງງານຕ່າງປະເທດຕ່ຳ ໂດຍສະເພາະແມ່ນໃນເງື່ອນໄຂທີ່ປະເທດເຮົາ ພວມກ້າວເຂົ້າສູ່ການປະຕິບັດເຂດການຄ້າເສລີອາຟຕາ (**AFTA**) ແລະ ການເຊື່ອມໂຍງເປັນປະຊາຄົມອາຊຽນ.

ໃນຊຸມປີຕໍ່ໜ້າ ພວກເຮົາຍັງຕ້ອງຮັບມືກັບກົນອຸບາຍມ້າງເພທຳລາຍທຸກຮູບແບບຈາກອິດທິກຳລັງປໍລະປັກ ພ້ອມທັງປະເຊີນກັບປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນຫຼາຍຂົງເຂດຂອງຊີວິດສັງຄົມ.

ສິ່ງທີ່ກ່າວມານັ້ນ ເປັນຄວາມຫຍຸ້ງຍາກ, ອຸປະສັກ ແລະ ສິ່ງທ້າທາຍ ທີ່ແທ້ຈິງຕໍ່ການຊີ້ນຳ-ນຳພາຢູ່ທຸກລະດັບ ແລະ ຈະສົ່ງຜົນກະທົບໂດຍກົງຕໍ່ໝາກຜົນການເຄື່ອນໄຫວຕົວຈິງ. ແຕ່ຈາກບົດຮຽນພຶດຕິກຳຂອງພັກເຮົາເວົ້າລວມ ຂອງອົງຄະນະພັກ

ແຂວງອັດຕະປືເວົ້າສະເພາະ, ຈາກພື້ນຖານດ້ານຕ່າງໆ ທີ່ມີໃນປະຈຸບັນ, ບວກກັບການນຳແຕ່ລະຂັ້ນມີຄວາມເຂົ້າໃຈແຈ້ງເຖິງທ່າແຮງບົ່ມຊ້ອນໂອກາດ ແລະ ເງື່ອນໄຂທີ່ເອື້ອອຳນວຍ ແລະ ບັນ ຫາຕົວຈິງທີ່ຕ້ອງໄດ້ແກ້ໄຂ, ພ້ອມທັງມີຄວາມຕັດສິນໃຈອັນແນວແນ່, ຮູ້ສ້າງ ແລະ ປັບປຸງຄວາມສາມັກຄີພາຍໃນ ກໍ່ຄືສ້າງຄວາມເປັນປຶກແຜ່ນຂອງທົ່ວສັງຄົມ ກໍ່ຈະສາມາດແກ້ໄຂຜ່ານຜ່າຄວາມຫຍຸ້ງຍາກອຸປະສັກ ແລະ ສິ່ງທ້າທາຍເຫຼົ່ານັ້ນໄດ້, ຈຳກັດຜົນກະທົບທາງລົບໃນການພັດທະນາເສດຖະກິດ-ສັງຄົມ, ຈາກນັ້ນກໍ່ສາມາດບັນລຸຈຸດໝາຍປາຍທາງທີ່ກຳນົດໄວ້.

**ຂ. ຄາດໝາຍລວມ ແລະ ທິດທາງໜ້າທີ່ລະອຽດສຳລັບແຕ່ລະຂົງເຂດວຽກງານ.**

**ຄາດໝາຍສູ້ຊົນສຳລັບແຕ່ນີ້ຮອດປີ** 2015.

• ປັບປຸງລະບົບການເມືອງໃຫ້ເຂັ້ມແຂງ, ຕິດພັນກັບການເສີມຂະ ຫຍາຍປະຊາທິປະໄຕໃນທຸກລະດັບ ໄປຄຽງຄູ່ກັບການເພີ່ມທະວີການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍໃຫ້ເຂັ້ມງວດ, ປັບປຸງ ແລະ ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນໃນທົ່ວສັງຄົມ, ປຸກບັນຍາກາດແຫ່ງການບືນຕົວພັດທະນາຕົນເອງໃນທົ່ວສັງຄົມໃຫ້ເປັນຂະບວນຟົດຟື້ນ.

• ສູ້ຊົນເຮັດໃຫ້ເສດຖະກິດຂະຫຍາຍຕົວໄວ ແລະ ໝັກແໜ້ນມີອັດຕາເພີ່ມຂຶ້ນຂອງ **GDP** ສະເລ່ຍບໍ່ຕ່ຳກວ່າ **12,5%** ຕໍ່ປີ, ລາຍຮັບສະເລ່ຍ **1.000** ໂດລາຕໍ່ຄົນຕໍ່ປີ, ລາຍຮັບງົບປະມານບັນລຸ **282,8** ຕື້ກີບ, ກວມເອົາ **5-10%**ຕໍ່ປີຂອງ **GDP;** ຄອບຄົວທຸກຍາກຍັງເຫຼືອບໍ່ໃຫ້ເກີນ **10%** ໃນປີ **2015.** ໂຄງປະກອບກະສິກຳ-ປ່າໄມ້ ມີຄວາມສົມເຫດສົມຜົນ, ຜູ້ປະກອບການຂະໜາດນ້ອຍ, ຂະໜາດກາງຂະຫຍາຍຕົວແຂງແຮງ, ເຮັດສຳເລັດໂດຍພື້ນຖານການຈັດສັນບ້ານໂຮມບ້ານນ້ອຍເປັນບ້ານໃຫຍ່ ແລະ ການ ຈັດສັນອາຊີບຄົງທີ່ໃຫ້ປະຊາຊົນ ເຮັດໃຫ້ການຜະລິດສິນຄ້າຂອງປະຊາຊົນ ຂະຫຍາຍຕົວເປັນຂະບວນເດັ່ນຊັດ.

• ສູ້ຊົນແກ້ໄຂບັນດາປະກົດການຫຍໍ້ທໍ້ໃນກົງຈັກການຈັດຕັ້ງ, ຖັນແຖວພະນັກງານ ແລະ ສັງຄົມ ໃຫ້ໄດ້ໂດຍພື້ນຖານ, ຮັບປະກັນໃຫ້ສັງຄົມມີຄວາມສະຫງົບ, ປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍ.

• ສູ້ຊົນໃຫ້ເດັກທຸກຄົນໄດ້ເຂົ້າໂຮງຮຽນ, ທຸກເມືອງສາມາດປະກາດ ລົບລ້າງເມືອງຈົບຊັ້ນປະຖົມ, ປັບປຸງຄຸນນະພາບການສຶກສາໃຫ້ສູງຂຶ້ນເທື່ອລະກ້າວ ປະຊາຊົນໄດ້ຮັບການບໍລິການສຸຂະພາບຢ່າງທົ່ວເຖິງ, ລະດັບຄວາມແຕກໂຕນລະຫວ່າງຕົວເມືອງ ແລະ ເຂດທົ່ງພຽງກັບເຂດພູດອຍ ແລະ ລະຫວ່າງເຜົ່າໃຫ້ຫຼຸດລົງ, ເຮັດໃຫ້ທຸກຄົນ, ທຸກພື້ນທີ່, ທຸກເຜົ່າ ໄດ້ຮັບຜົນປະໂຫຍດຈາກຜົນສຳເລັດລວມຂອງການພັດທະນາ.

• ມໍລະດົກດ້ານວັດທະນະທຳ, ຮີດຄອງປະເພນີອັນດີງາມ ທີ່ເປັນເອກະລັກຂອງທ້ອງຖິ່ນ, ຂອງເຜົ່າໄດ້ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍ; ປະຊາຊົນສ່ວນໃຫຍ່ ໄດ້ເຂົ້າເຖິງແຫຼ່ງຂ່າວສານອັນຈຳເປັນດ້ວຍ ຫຼາຍຊ່ອງທາງທີ່ເໝາະສົມ.

• ຄຸ້ມຄອງຄົນເຂົ້າອອກເມືອງ ແລະ ແຮງງານຕ່າງປະເທດ ໃຫ້ໄດ້ຕາມລະບຽບກົດໝາຍໂດຍພື້ນຖານ; ປັບປຸງກົນໄກບໍລິການຜ່ານແດນ ແລະ ຍົກລະດັບການບໍລິການຂອງດ່ານສາກົນພູເກືອໃຫ້ມີປະສິດທິພາບສູງ ໂດຍສອດຄ່ອງກັບກົນໄກບູລິມະສິດພິເສດຂອງສາມຫຼ່ຽມພັດທະນາ, ເສີມຂະຫຍາຍບົດບາດຂອງແຂວງອັດຕະປື ໃຫ້ກາຍເປັນໜຶ່ງໃນຈຸດໃຈກາງເຊື່ອມໂຍງຂອງເຂດສາມຫຼ່ຽມພັດທະນາ ແລະ ກັບອະນຸພາກພື້ນ.

**ຄາດໝາຍສູ້ຊົນລະອຽດແຕ່ລະຂົງເຂດ.**

1. **ຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ:**

ສືບຕໍ່ຖືເອົາການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ເປັນວຽກທີ່ຄະນະພັກແຕ່ລະຂັ້ນຕ້ອງ ໄດ້ເອົາໃຈໃສ່ຊີ້ນຳເປັນພິເສດ. ບັນຫາທີ່ຈະຕ້ອງສຸມໃສ່ແກ້ໄຂແມ່ນບັນດາປະກົດການຫຍໍ້ທໍ້ທີ່ກຳລັງພົ້ນເດັ່ນເຊັ່ນ: ການຄ້າຂາຍໄມ້ເຖື່ອນ, ການຄ້າ ແລະ ເສບຢາເສບຕິດ, ການລະເມີດກົດ ຈໍລະຈອນ ແລະ ອຸປະຕິເຫດ, ການ ຄຸ້ມຄອງອາວຸດເສິກ ແລະ ອາວຸດລ່າເນື້ອທີ່ບໍ່ໄດ້ຮັບອະນຸຍາດ, ຄົນເຂົ້າ-ອອກ ເມືອງທີ່ປະກອບອາຊີບຜິດກົດໝາຍຂອງຄົນຕ່າງປະເທດ.ບັນຫາການລັກລອບຂຸດຄົ້ນຊັບພະຍາກອນທີ່ມີຄ່າ, ທີ່ພາໃຫ້ເກີດມີຄວາມບໍ່ສະຫງົບ ໂດຍເອົາກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບເປັນຫຼັກແຫຼ່ງ ແລະ ປຸກລະດົມການເຂົ້າຮ່ວມຂອງທົ່ວສັງຄົມ ໃນການແກ້ໄຂບັນຫາເຫຼົ່ານັ້ນ. ປັບປຸງລະບົບການຈັດຕັ້ງຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຕ່ ຂັ້ນແຂວງລົງຮອດຮາກຖານໃຫ້ມີຄວາມເຂັ້ມແຂງ ແລະ ມີການເຄື່ອນໄຫວຢ່າງແຂງແຮງ, ສູ້ຊົນສ້າງແຂວງໃຫ້ກາຍເປັນຫົວໜ່ວຍຍຸດທະສາດຮັບຜິດຊອບທິດໜຶ່ງຂອງປະເທດ, ສ້າງເມືອງເປັນຫົວໜ່ວຍສູ້ລົບເອກະລາດ, ສ້າງບ້ານ ແລະ ກຸ່ມບ້ານເປັນປ້ອມໝັ້ນສູ້ລົບ ແລະ ສູ້ລົບຕິດລ່ຽນ.

2. **ຂົງເຂດເສດຖະກິດ ແລະ ແກ້ໄຂຄວາມທຸກຍາກ.**

2.1. **ວຽກງານກະສິກໍາ-ປ່າໄມ້.**

ການຍົກລະດັບການຜະລິດກະສິກຳ-ປ່າໄມ້ ໂດຍຕິດພັນກັບການຂຸດຄົ້ນຢ່າງສຸດຂີດ, ສົມເຫດສົມຜົນທ່າແຮງດ້ານດິນ, ນໍ້າ, ປ່າໄມ້, ມູນເຊື້ອການປູກ, ການລ້ຽງຂອງປະຊາຊົນ ແລະ ການນໍາໃຊ້ເຕັກນິກໃໝ່ແມ່ນທາງອອກພື້ນຖານຕົ້ນຕໍໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນ. ສຸມໃສ່ການຍົກສະມັດຕະພາບຂອງການຜະລິດເຂົ້າໃນເນື້ອທີ່ທີ່ມີແລ້ວ ບົນພື້ນຖານການເພີ່ມເນື້ອທີ່ການນໍາໃຊ້ນໍ້າຊົນລະປະທານ, ຍົກລະດັບເຕັກນິກໃຫ້ຊາວບ້ານ; ສືບຕໍ່ປະຕິບັດບັນດາໂຄງການຊົນລະປະທານທີ່ກໍາລັງກໍ່ສ້າງໃຫ້ສໍາເລັດໂດຍໄວ, ບໍາລຸງຮັກສາ ແລະ ຍົກລະດັບຊົນລະປະທານທີ່ມີແລ້ວໃຫ້ສາມາດທົດເນື້ອທີ່ໃຫ້ຫຼາຍຂຶ້ນ, ສູ້ຊົນຮອດປີ **2015** ຜະລິດເຂົ້າເປືອກໃຫ້ໄດ້ບໍ່ຕໍ່າກວ່າ **118.000** ໂຕນ,**...** ສະເລ່ຍໃສ່ຫົວຄົນ **863** ກິໂລຕໍ່ຄົນຕໍ່ປີ. ມີແຜນການຂະຫຍາຍການປູກກາເຟ, ມັນຕົ້ນ-ສາລີ ແລະ ພືດຜັກຕ່າງໆ ໄປຄຽງຄູ່ກັບການສົ່ງເສີມການລ້ຽງສັດ, ລ້ຽງປາ ຕິດພັນກັບການຍົກລະດັບດ້ານເຕັກນິກຮັບປະກັນດ້ານການຕະຫຼາດ ແລະ ການສະໜອງແຫຼ່ງ ທຶນໃຫ້ຊາວກະສິກອນ. ສືບຕໍ່ຈັດຕັ້ງປະຕິບັດບັນດາຮູບການລົງທຶນພາຍໃນແລະຕ່າງປະເທດໃນການປູກຢາງພາລາ, ຕົ້ນໄມ້ອຸດສາຫະກໍາ ແລະ ພືດຜັກຕິດພັນກັບການປຸງແຕ່ງຜະລິດຕະພັນ ເພີ່ມມູນຄ່າຂອງສິນຄ້າການກະເສດ. ສືບຕໍ່ຈັດຕັ້ງປະຕິບັດການຈັດສັນປະເພດປ່າຕ່າງໆໃຫ້ສໍາເລັດ ເພື່ອເປັນພື້ນຖານໃນການຄຸ້ມຄອງນໍາໃຊ້, ຄຸ້ມຄອງການຂຸດຄົ້ນໄມ້ ໃຫ້ໄປຕາມລະບຽບກົດໝາຍຢ່າງເຂັ້ມງວດ, ພ້ອມທັງມີມາດຕາການຕົວຈິງໃນການຟື້ນຟູແລະຮັກສາຄວາມອຸດົມສົມບູນຂອງປ່າໄມ້, ຢຸດຕິຢ່າງສິ້ນເຊີງການຖາງປ່າເຮັດໄຮ່ດ້ວຍການຈັດສັນພູມລໍາເນົາ ແລະ ອາຊີບຄົງທີ່ໃຫ້ປະຊາຊົນຢ່າງຂາດຕົວ.

2.2. **ວຽກງານການຄຸ້ມຄອງ ແລະ ພັດທະນາທີ່ດິນ:**

ການນໍາໃຊ້ທີ່ດິນ, ການແກ້ໄຂບັນຫາທີ່ດິນ ໄດ້ກາຍເປັນໜຶ່ງໃນບັນຫາຮີບດ່ວນ ແລະ ເປັນໜຶ່ງໃນປັດໄຈສໍາຄັນພື້ນຖານຕັດສິນຜົນສໍາເລັດໃນການພັດທະນາເສດຖະກິດ-ສັງຄົມໃນຊຸມປີຕໍ່ໜ້າ. ສືບຕໍ່ດໍາເນີນການຈັດສັນທີ່ດິນແຕ່ລະປະເພດໃຫ້ສໍາເລັດ ຂຶ້ນສໍາມະໂນທີ່ດິນໃຫ້ສໍາເລັດເປັນສ່ວນໃຫຍ່, ຄຸ້ມຄອງການນໍາໃຊ້ທີ່ດິນໃຫ້ໄປຕາມລະບຽບກົດໝາຍຢ່າງເຂັ້ມງວດ ແລະ ເປັນປະໂຫຍດສູງສຸດ, ຄົ້ນຄວ້າ ແລະ ການົດມາດຕາການຕົວຈິງໃນການຫັນທີ່ດິນເປັນທຶນ, ຕັ້ງໜ້າຂຸດຄົ້ນທ່າແຮງດ້ານດິນ ແລະ ຄຸ້ມຄອງລາຍຮັບຈາກທີ່ດິນໃຫ້ເຂັ້ມງວດ. ສືບຕໍ່ປັບປຸງອົງການຄຸ້ມຄອງທີ່ດິນແຕ່ລະຂັ້ນ ໃຫ້ມີຄວາມເຂັ້ມແຂງ, ສາມາດເຮັດໜ້າທີ່ຄຸ້ມຄອງການນໍາໃຊ້ ແລະວາງແຜນພັດທະນາທີ່ດິນຢ່າງເໝາະສົມ ເພື່ອອໍານວຍຄວາມສະດວກໃນການຈັດສັນ, ການໃຫ້ເຊົ່າ ແລະ ສໍາປະທານທີ່ຮັບປະກັນຜົນປະໂຫຍດສູງສຸດ.

2.3. **ວຽກງານ ພະລັງງານ-ບໍ່ແຮ່:**

ການຂຸດຄົ້ນນໍາໃຊ້ທ່າແຮງດ້ານພະລັງງານ-ບໍ່ແຮ່ ເປັນໜຶ່ງໃນວຽກບູລິມະສິດໃນການພັດທະນາເສດຖະ ກິດ-ສັງຄົມຂອງແຂວງ. ໃນຊຸມປີຕໍ່ໜ້າພວກເຮົາຕ້ອງສືບຕໍ່ຊຸກຍູ້ ເອື້ອອໍານວຍເງື່ອນໄຂຕ່າງໆ ເທົ່າທີ່ຈະເຮັດໄດ້ ເພື່ອໃຫ້ບັນດາໂຄງການພັດທະນາເຂື່ອນໄຟຟ້ານໍ້າຕົກ, ການສໍາຫຼວດແຮ່ທາດຕ່າງໆ ທີ່ລັດຖະບານໄດ້ອະນຸມັດແລ້ວ ໃຫ້ສາມາດດໍາເນີນການກໍ່ສ້າງໃຫ້ສໍາເລັດໂດຍໄວ ແລະ ດາເນີນການຂຸດຄົ້ນ, ປຸງແຕ່ງຕາມຄວາມເໝາະສົມ; ສົ່ງເສີມການລົງທຶນພັດທະນາເຂື່ອນໄຟຟ້າຂະໜາດນ້ອຍໃຫ້ແຂງແຮງ. ຕັ້ງໜ້າຂະຫຍາຍຕາຂ່າຍໄຟຟ້າແຮງກາງ, ແຮງຕໍ່າ ແລະ ໄຟຟ້າແສງຕາເວັນໄປສູ່ເຂດຊຸມຊົນ, ບັນດາຈຸດສຸມພັດທະນາໃຫ້ທົ່ວເຖິງ ເຮັດໃຫ້ປະຊາຊົນໄດ້ຊົມໃຊ້ໄຟຟ້າກວມເອົາ **90%** ຂອງຄົວເຮືອນທັງໝົດ. ສົ່ງເສີມການນໍາໃຊ້ພະລັງງານເຕົາອາຍແກັສ (**BIO GASS**) ເພື່ອຮັບໃຊ້ຊີວິດການເປັນຢູ່ຂອງປະຊາຊົນບ່ອນທີ່ມີເງື່ອນໄຂ.

2.4. **ວຽກງານໂຍທາທິການ, ຂົນສົ່ງ ແລະ ໂທລະຄົມມະນາຄົມ.**

ຂະແໜງໂຍທາທິການ, ຂົນສົ່ງ ແລະ ໂທລະຄົມມະນາຄົມມີບົດບາດສໍາຄັນຢູ່ແຖວໜ້າ ແລະ ເປັນປັດໄຈຈໍາເປັນທີ່ສຸດສໍາລັບການຈັດສັນອາຊີບ, ການຜະລິດສິນຄ້າ, ການສົ່ງເສີມການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ກໍ່ຄືການຂະຫຍາຍການສຶກສາ, ວັດທະນະທໍາສັງຄົມຂອງແຂວງ ແລະ ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນຢູ່ຊົນນະບົດຫ່າງໄກສອກຫຼີກ. ໃນຊຸມປີຕໍ່ໜ້າ ຍັງຕ້ອງສືບຕໍ່ເອົາໃຈໃສ່ການກໍ່ສ້າງ, ສ້ອມແປງ ແລະ ຂະຫຍາຍຂົວ-ທາງແຕ່ແຂວງໄປຫາເມືອງ, ແຕ່ເມືອງຫາກຸ່ມບ້ານ ແລະ ຈຸດທ່ອງທ່ຽວທີ່ສໍາຄັນ ເພື່ອໃຫ້ທຸກພື້ນທີ່ ແລະ ທຸກຈຸດຂອງການພັດທະນາມີເສັ້ນທາງທີ່ລື່ງລ່ຽນໄປມາສະດວກທັງສອງລະດູ, ເອົາໃຈໃສ່ຄຸ້ມຄອງດ້ານເຕັກນິກການກໍ່ສ້າງສ້ອມແປງ ເພື່ອໃຫ້ຂົວ-ທາງມີຄຸນນະພາບ ແລະ ໃຊ້ໄດ້ດົນນານ. ຄຸ້ມຄອງຜັງເມືອງ ແລະ ການປຸກສ້າງໃຫ້ເຂັ້ມງວດ, ຮັບປະກັນຄວາມເປັນລະບຽບ ສົ່ງເສີມເອກະລັກໃນການອອກແບບການປຸກສ້າງ ແລະ ມີຄວາມສະອາດສວຍງາມ. ສືບຕໍ່ປັບປຸງແຜນຜັງບັນດາໃຈກາງຂອງເມືອງ, ຂອງກຸ່ມບ້ານ, ເຂດອຸດສາຫະກໍາໃຫ້ສໍາເລັດ. ຂະຫຍາຍການບໍລິການໄປສະນີ ໂທລະຄົມມະນາຄົມ ດ້ວຍພາຫານະສື່ສານທີ່ທັນສະໄໝ, ວ່ອງໄວ ແລະ ທົ່ວ

ເຖິງທຸກພື້ນທີ່. ແກ້ໄຂການສະໜອງນ້ຳສະອາດ ດ້ວຍການຂະຫຍາຍໂຄງການນ້ຳ ປະປາລົງສູ່ເມືອງ ແລະ ກຸ່ມບ້ານຈຸດສຸມ ທີ່ເປັນຊຸມຊົນຕ່າງໆໃຫ້ທົ່ວເຖິງ.

2.5. **ວຽກງານອຸດສາຫະກຳ ແລະ ການຄ້າ.**

ການສົ່ງເສີມການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເຂົ້າໃນການກໍ່ສ້າງ, ຂະຫຍາຍໂຮງງານອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ-ປ່າໄມ້ ເປັນວຽກບູລິມະສິດ ເພື່ອຮັບປະກັນການສ້າງຕະຫຼາດກັບທີ່ໃຫ້ຊາວກະສິກອນ. ໃນນັ້ນ ສົມທົບລະຫວ່າງການລົງທຶນໂດຍກົງຢູ່ແຂວງອັດຕະປື ກັບການລົງທຶນຢູ່ບັນດາແຂວງພາກໃຕ້. ສົ່ງເສີມການລົງທຶນເຂົ້າໃສ່ເຂດອຸດສາຫະກຳທີ່ໄດ້ກຳນົດແລ້ວໃຫ້ເປັນຕົ້ນເປັນໂຕ ສົມທົບແໜ້ນກັບບັນດາໂຄງການລົງທຶນຂະໜາດໃຫຍ່-ຂະໜາດກາງ ທີ່ລັດຖະບານຕົກລົງກັບບັນດາໂຄງການກໍ່ສ້າງໂຮງງານອຸດ ສາຫະກຳຂະໜາດນ້ອຍ ແລະ ຫັດຖະກຳ ເພື່ອສ້າງວຽກເຮັດໃຫ້ນັບມື້ນັບຫຼາຍ. ສືບຕໍ່ດັດສົມບັນດາໂຮງງານປຸງແຕ່ງໄມ້ ຕາມແຜນນະໂຍບາຍຂອງລັດຖະບານໃຫ້ສຳເລັດ ແລະ ເຄື່ອນໄຫວມີປະສິດທິຜົນ. ສູ້ຊົນຮອດ **2015** ສ້າງມູນຄ່າໃນດ້ານອຸດສາຫະກຳໃຫ້ບັນລຸໄດ້ **421** ຕື້ກີບ.

**ໃນດ້ານການຄ້າ** ຕ້ອງສຸມໃສ່ການເສີມຂະຫຍາຍບົດບາດຂອງການ ຄ້າໃນການເຊື່ອມໂຍງພາຍໃນກອບສາມຫຼ່ຽມພັດທະນາ ແລະ ຕາມແລວເສດຖະກິດຕາເວັນອອກ, ຕາເວັນຕົກ, ພັດທະນາເຂດດ່ານພູເກືອ ໃຫ້ກາຍເປັນເຂດການຄ້າຊາຍແດນທີ່ມີການຂະຫຍາຍຕົວແຂງແຮງ.

2.6. **ວຽກງານການເງິນ**: ການເງິນ-ງົບປະມານ ແມ່ນຕົວຊີ້ວັດທີ່ສຳ ຄັນເຖິງຖ່ອງທ່າ ແລະ ກຳລັງເສດຖະກິດ-ສັງຄົມກໍ່ຄືປະສິດທິພາບຂອງການບໍລິຫານ. ໃນຊຸມປີຕໍ່ໜ້າສູ້ຊົນເກັບລາຍຮັບງົບປະມານໃຫ້ກຸ້ມລາຍຈ່າຍບໍລິຫານ ແລະ ລາຍຈ່າຍລົງທຶນຈຳນວນໜຶ່ງ ແກ້ໄຂໜີ້ສິນຄຸມເຄືອໃຫ້ໄດ້ເປັນສ່ວນໃຫຍ່. ປະຕິບັດການລົງທຶນຕາມລະບຽບກົດໝາຍຢ່າງເຄັ່ງຄັດ, ສະກັດກັ້ນປະກົດການຫຍໍ້ທໍ້ໃນຂົງເຂດການເງິນ, ແຜນການ ແລະ ການລົງທຶນ, ພະຍາຍາມດ້ວຍຫຼາຍວິທີອັນເໝາະສົມເພື່ອນຳພາ, ຈັດຕັ້ງ ແລະ ສ້າງເງື່ອນໄຂໃຫ້ຊາວກະສິກອນ, ຜູ້ປະກອບການຂະໜາດນ້ອຍ-ກາງ ເຂົ້າເຖິງແຫຼ່ງເງິນກູ້ດອກເບ້ຍຕໍ່າ ແລະ ແຫຼ່ງທຶນອື່ນໆ ເພື່ອການຜະລິດສິນຄ້າ ແລະ ຍົກລະດັບຊີວິດການເປັນຢູ່.

**2.7. ວຽກງານທ່ອງທ່ຽວ:** ແຫຼ່ງທ່ອງທ່ຽວປະຫວັດສາດ, ທຳມະຊາດ ແລະ ວັດທະນະທຳ ທີ່ເປັນທ່າແຮງບົ່ມຊ້ອນຄວນໄດ້ຮັບການພັດທະນາຢ່າງຈິງຈັງ ແລະ ເປັນສ່ວນສຳຄັນໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງໃນຊຸມປີຕໍ່ໜ້າ. ພວກເຮົາຕ້ອງສຸມໃສ່ການລົງທຶນກໍ່ສ້າງຍົກລະດັບເສັ້ນ ທາງເຂົ້າສູ່ແຫຼ່ງທ່ອງທ່ຽວທີ່ສຳຄັນໆ; ຕັ້ງໜ້າຊຸກຍູ້ນັກລົງທຶນ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາແຫຼ່ງທ່ອງທ່ຽວຕ່າງໆໄປຄຽງຄູ່ກັບການຂະຫຍາຍຍົກລະດັບການບໍລິການໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ວັດທະນະທຳທີ່ເປັນເອກະລັກ. ປັບປຸງກົງຈັກການຈັດຕັ້ງ, ຍົກລະດັບຄຸນແຖວພະນັກງານ ທີ່ເຮັດໜ້າທີ່ສົ່ງເສີມການທ່ອງທ່ຽວ ພ້ອມທັງປັບປຸງກົນໄກຄຸ້ມຄອງຕ່າງໆໃຫ້ກະທັດລັດເນັ້ນການສ້າງຄວາມສະດວກສະບາຍໃນການເຂົ້າອອກເມືອງ, ການພັກເຊົາ, ການໄປມາຂອງນັກທ່ອງທ່ຽວ, ພະຍາຍາມເຊື່ອມໂຍງການທ່ອງທ່ຽວຢູ່ແຂວງອັດຕະປື ແລະ ບັນດາແຂວງພາກໃຕ້ ກ້າວໄປສູ່ການເຊື່ອມໂຍງການທ່ອງທ່ຽວອະນຸພາກພື້ນຕາມແລວເສດຖະກິດຕາເວັນອອກຕາເວັນຕົກ.

2.8. **ວຽກງານຊັບພະຍາກອນ ແລະ ສິ່ງແວດລ້ອມ:** ຄຸ້ມຄອງການຂຸດຄົ້ນ ນຳໃຊ້ຊັບພະຍາກອນ ເພື່ອຮັບປະ ກັນຜົນປະໂຫຍດສູງສຸດ ແລະ ຮັບປະກັນການປົກປັກຮັກສາສະພາບແວດລ້ອມ ໂດຍສະເພາະແມ່ນຮັກສາແຫຼ່ງນ້ຳ, ປ່າໄມ້, ຄວາມສະອາດຂອງຕົວເມືອງ ແລະ ເຂດຊຸມຊົນ. ປູກຈິດສຳນຶກດ້ານສິ່ງແວດລ້ອມໃຫ້ຊຸມຊົນ ແລະທົ່ວສັງຄົມໄປຄຽງຄູ່ກັບການ ສ້າງຄວາມເຂັ້ມແຂງທາງວິຊາການຂັ້ນແຂວງ, ຂັ້ນເມືອງ ໃນການຄຸ້ມຄອງສິ່ງແວດລ້ອມ ໂດຍສະເພາະແມ່ນໃຫ້ສາມາດຄຸ້ມຄອງບັນດາໂຄງການລົງທຶນໃຫ້ຮັບປະກັນສິ່ງແວດລ້ອມໄດ້ຢ່າງເຂັ້ມງວດ. ພັດທະນາຕົວເມືອງສາ ມັກຄີໄຊ, ໃຈກາງບັນດາເມືອງ ແລະ ຊຸມຊົນສຳຄັນເປັນເຂດສີຂຽວດ້ວຍການກຳຈັດຂີ້ເຫຍື້ອ, ແກ້ໄຂນ້ຳເປື້ອນ, ປູກໄມ້ເປັນຮົ່ມ, ໄມ້ປະດັບອື່ນໆ. ຍົກລະດັບຄວາມສາມາດໃນການພະຍາກອນອາກາດ ແລະ ການເຕືອນໄພຈາກທຳມະຊາດໃຫ້ຍັບໃກ້ຄວາມຊັດເຈນຂຶ້ນຕື່ມ.

3. **ການພັດທະນາສັງຄົມ-ວັດທະນະທຳ:**

ພວກເຮົາຕ້ອງເຂົ້າໃຈເອກະພາບນຳກັນວ່າ: ການພັດທະນາສັງຄົມ-ວັດທະນະທຳເນື້ອແທ້ແມ່ນການພັດທະນາຄຸນນະພາບຂອງຄົນ, ສ້າງຄວາມສີວິໄລຍຸຕິທຳຂອງສັງຄົມ ແລະ ອັນນີ້ ກໍ່ແມ່ນເປົ້າໝາຍສູງສຸດຂອງການພັດທະນາເສດຖະກິດ.

3.1. **ວຽກງານສຶກສາ:** ປັບປຸງອາຄານຮຽນໃຫ້ເປັນອາຄານຖາວອນ, ເພີ່ມຫ້ອງຮຽນໃຫ້ພຽງພໍ, ຂະຫຍາຍໂຮງຮຽນອະນຸບານໃຫ້ທົ່ວເຖິງ ຮັບປະກັນໃຫ້ເດັກໃນເກນອາຍຸຮຽນໄດ້ເຂົ້າຮຽນ **95-98%.** ອັດຕານັກຮຽນປະລະການຮຽນທຸກຂັ້ນສະ

ເລ່ຍບໍ່ເກີນ **3%;** ເຮັດໃຫ້ເດັກທຸກໆບ້ານສາມາດເຂົ້າ ຮຽນລະດັບປະຖົມສົມບູນ. ລຶບລ້າງຄວາມບໍ່ຮູ້ໜັງສືຂອງປະຊາຊົນໃນເກນອາຍຸ **15-40** ປີໃຫ້ໄດ້ຢ່າງແຂງແຮງ. ແຕ່ລະເມືອງໃຫ້ສາມາດປະກາດບ້ານຈົບຊັ້ນປະຖົມໃຫ້ໄດ້ **80%** ຂອງຈຳນວນບ້ານ. ແກ້ໄຂບັນຫາຂາດຄູສອນໂດຍສະເພາະຢູ່ຊັ້ນປະຖົມໃຫ້ໄດ້ຢ່າງຂາດຕົວ, ເອົາໃຈໃສ່ພັດທະນາພື້ນຖານໂຄງລ່າງ, ການປະກອບອຸປະກອນ, ສູ້ຊົນໃຫ້ໂຮງຮຽນສ່ວນໃຫຍ່ມີຫໍສະໝຸດ ແລະ ມີອຸປະກອນຄອມພິວເຕີ ເພື່ອຮັບໃຊ້ການຮຽນການສອນ, ສົ່ງເສີມການສ້າງຕັ້ງໂຮງຮຽນເອກະຊົນ ຄຽງຄູ່ກັບໂຮງຮຽນຂອງລັດ, ໂດຍສະເພາະແມ່ນໂຮງຮຽນເຕັກນິກວິຊາຊີບ. ປັບປຸງການຈັດຕັ້ງ, ຍົກລະດັບຜູ້ບໍລິຫານການສຶກສາ ແລະ ຍົກຄຸນນະພາບຄູອາຈານໃຫ້ສູງຂຶ້ນ.

**ວຽກງານກິລາ:** ເອົາໃຈໃສ່ສົ່ງເສີມຂະບວນການກິລາ ໃນໝູ່ມະຫາ ຊົນໃຫ້ເປັນຂະບວນກວ້າງຂວາງ, ທຸກໂຮງຮຽນ, ທຸກບ້ານໃຫ້ມີເດີ່ນຫຼິ້ນ ກິລາບານເຕະ-ບານສົ່ງ, ກະຕໍ້ຫວາຍ,... ການສົ່ງເສີມກິລາປະເພດຕ່າງໆ ແມ່ນປັບປຸງ ສ້າງໃຫ້ນັກກິລາທີ່ມີພອນສະຫວັນ, ເພື່ອສາມາດໄປແຂ່ງຂັນຢູ່ພາຍໃນ ແລະ ຕ່າງປະເທດ, ຢູ່ຂັ້ນແຂວງ ແລະ ເມືອງຄວນຈັດຕັ້ງການແຂ່ງຂັນກິລາປະຈຳປີເປັນປົກກະຕິ ແລະ ເປັນຂະບວນຟົດຟື້ນ.

**3.2. ວຽກງານສາທາລະນະສຸກ:** ຍົກລະດັບການບໍລິການສຸຂະພາບ ຂອງປະຊາຊົນຕິດພັນກັບການປະກອບເຄື່ອງມືອຸປະກອນການແພດ, ເຕັກນິກທີ່ຈຳເປັນໃຫ້ໂຮງໝໍແຂວງ, ເມືອງ ແລະ ສຸກສາລາ. ບຳລຸງຍົກລະດັບວິຊາການ ພ້ອມໆກັບການຍົກລະດັບຈັນຍາບັນຂອງແພດໝໍ, ປັບປຸງຕູ້ຢາປະຈຳບ້ານ ແລະ ຍົກລະດັບຄວາມຮູ້, ຄວາມສາມາດ ແລະຄວາມຮັບຜິດ ຊອບຂອງ ອສບ ເຮັດໜ້າທີ່ໂຄສະນາ, ປຸກລະດົມປະຊາຊົນໃນການອານາໄມສາມສະອາດ. ການພັດທະນາສາທາລະນະສຸກ ໂດຍມີສ່ວນຮ່ວມທັງລັດ ແລະປະຊາຊົນ, ສົ່ງເສີມໂພສະນາການ,ແກ້ໄຂການຂາດສານອາຫານ ຮ້າຍແຮງຂອງເດັກນ້ອຍລຸ່ມ **5** ປີ, ແກ້ໄຂນ້ຳສະອາດ, ຫວິດຖ່າຍ, ສ້າງສາທາລະນະສຸກແບບຢ່າງ ແລະເຝົ້າລະວັງໂລກລະບາດຢ່າງມີປະສິດທິພາບ.

3.3. **ວຽກງານຖະແຫຼງຂ່າວ ແລະ ວັດທະນະທຳ:** ສູ້ຊົນສ້າງຕາໜ່າງການໂຄສະນາລົງຮອດທຸກໆບ້ານ ເຮັດໃຫ້ທຸກພື້ນທີ່ສາມາດຮັບສັນຍານໂທລະພາບແຫ່ງຊາດ, ສາມາດຮັບຟັງລາຍການວິທະຍຸຢ່າງທົ່ວເຖິງ. ສືບຕໍ່ສົ່ງເສີມສິລະປະວັນນະຄະດີມະຫາຊົນໃຫ້ເປັນຂະບວນກວ້າງຂວາງ, ຕິດພັນກັບການຍົກລະດັບມູນເຊື້ອວັດທະນະທຳ, ຮີດຄອງປະເພນີທີ່ເປັນເອກະລັກຂອງທ້ອງຖິ່ນ ແລະ ຂອງເຜົ່າ, ເອົາໃຈໃສ່ພັດທະນາແຫຼ່ງຮຽນຮູ້ ແລະ ບ່ອນທ່ຽວຊົມພັກຜ່ອນມ່ວນຊື່ນຂອງປະຊາຊົນເຊັ່ນ: ສູນວັດທະນະທຳ, ສວນສາທາລະນະ, ຫໍພິພິທະພັນ, ຫໍສະໝຸດ ແລະ ອື່ນໆ. ສຳຫຼວດຊອກຄົ້ນຂຶ້ນບັນຊີ ແລະ ຄຸ້ມຄອງມໍລະດົກວັດທະນະທຳ ຕິດພັນກັບການບູລະນະປະຕິສັງຂອນວັດວາອາຮາມ, ບັນດາຮ່ອງຮອຍປະຫວັດສາດ, ວັດທະນະທຳ ແລະ ເຜີຍແຜ່ຄຸນຄ່າທາງຈິດໃຈໃຫ້ຄົນຮຸ່ນຫຼັງໄດ້ສືບທອດ. ຍູ້ແຮງການສ້າງຄອບຄົວ ແລະ ບ້ານວັດທະນະທຳສູ້ຊົນຮອດປີ **2015** ສ້າງບ້ານວັດທະນະທຳໃຫ້ໄດ້ ບໍ່ຕໍ່າກວ່າ **50%** ຂອງຈຳນວນບ້ານທົ່ວແຂວງ.

3.4. **ວຽກງານແຮງງານ ແລະ ສະຫວັດດີການສັງຄົມ:** ເພີ່ມທະວີການຄຸ້ມຄອງແຮງງານ, ການນຳໃຊ້ແຮງງານຂອງບັນດາຫົວໜ່ວຍທຸລະກິດ, ໃນບັນດາໂຄງການລົງທຶນ ໂດຍສະເພາະແມ່ນແຮງງານຈາກຕ່າງປະເທດ ໃຫ້ໄປຕາມລະບຽບກົດໝາຍຢ່າງເຂັ້ມງວດ. ສົມທົບລະຫວ່າງລັດກັບຜູ້ປະກອບການໃນການພັດທະນາສີມືແຮງງານ ເພື່ອສົ່ງເສີມການນຳໃຊ້ແຮງງານພາຍໃນ ແລະ ຍົກລະດັບສີມືຂອງແຮງງານຢູ່ທ້ອງຖິ່ນໃຫ້ສູງຂຶ້ນ, ແກ້ໄຂບັນຫາວຽກເຮັດງານທຳ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ.

ສືບຕໍ່ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ,ຕໍ່ຄອບຄົວວິລະຊົນແຫ່ງຊາດ, ນັກລົບແຂ່ງຂັນ, ພະນັກງານບຳນານ, ຜູ້ເສຍອົງຄະ ແລະ ຜູ້ດ້ອຍໂອກາດດ້ວຍຫຼາຍຮູບແບບ, ຫຼາຍລະດັບສອດຄ່ອງກັບນະໂຍບາຍລວມ ແລະຄວາມສາມາດຕົວຈິງຂອງທ້ອງຖິ່ນ. ກຽມພ້ອມ ແລະ ເປັນເຈົ້າການໃນການກູ້ໄພ, ການບັນເທົາທຸກເມື່ອເກີດໄພພິບັດ ແລະການຟື້ນຟູຫຼັງໄພພິບັດ.

ເສີມຂະຫຍາຍບົດບາດຂອງອົງການກາແດງ ໃນການຂົນຂວາຍທຶນຮອນ, ວັດຖຸປັດໄຈ, ປຸກລະດົມການບໍລິຈາກເລືອດຊ່ວຍເຫຼືອສັງຄົມ.

**3.5. ວຽກງານວິທະຍາສາດ ແລະ ເຕັກໂນໂລຊີ:** ສືບຕໍ່ດຳເນີນການ ພັດທະນາລະບົບການເຊື່ອມໂຍງເຄືອ ຂ່າຍຄອມພິວເຕີຢູ່ທຸກພະແນກການ ແລະ ອົງການຂັ້ນແຂວງ ແລະ ລະຫວ່າງແຂວງກັບເມືອງ, ເຮັດໃຫ້ລະບົບ ການບໍລິຫານຄຸ້ມຄອງເສດຖະກິດ-ສັງຄົມ ກາຍເປັນທັນສະໄໝໄດ້ລະດັບໜຶ່ງ. ຂະແໜງວິທະຍາສາດເຕັກໂນໂລຊີ ຕ້ອງມີການເຄື່ອນໄຫວທີ່ເຂັ້ມແຂງກວ່າເກົ່າໃນການເຜີຍແຜ່ຜົນສຳເລັດ ຂອງເຕັກໂນໂລຊີໃໝ່ຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ.

4. **ອົງເຂດລັດ, ແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນ.**

4.1. **ບໍລິຫານລັດ:** ການເພີ່ມທະວີຄວາມເຂັ້ມແຂງຂອງການຈັດຕັ້ງ ແລະ ປະສິດທິພາບໃນການເຄື່ອນໄຫວຂອງບັນດາການຈັດຕັ້ງລັດແຕ່ຂັ້ນແຂວງລົງຮອດເມືອງ ແລະ ຮາກຖານ ເປັນໜ້າທີ່ພື້ນຖານໂດຍກົງ ຂອງຄະນະພັກແຕ່ລະຂັ້ນທັງເປັນສິ່ງວັດແທກເຖິງຄວາມສາມາດນໍາພາ ຂອງບັນດາການນໍາຢູ່ແຕ່ລະບ່ອນ.

ໃນຊຸມປີຕໍ່ໜ້າ ສຸມໃສ່ການປັບປຸງບູລະນະດ້ານການຈັດຕັ້ງ ແລະ ສັບຊ້ອນພະນັກງານຄືນໃໝ່ ໄປຄຽງຄູ່ກັບການຫັນການເຄື່ອນໄຫວ ເຂົ້າສູ່ລະບຽບຫຼັກການຢ່າງເຂັ້ມງວດ, ປັບປຸງແກ້ໄຂກົນໄກແບບແຜນເຮັດວຽກໃຫ້ເປັນລະບົບລົ່ງລ່ຽນເອກະພາບ, ຮັບປະກັນການເຄື່ອນໄຫວທີ່ວ່ອງໄວ ແລະ ມີຄຸນນະພາບ ຕີຖອຍບັນດາປະກົດການຫຍໍ້ທໍ້ເຊັ່ນ: ການກົດໜ່ວງຖ່ວງດຶງ, ປ່ອຍປະລະເລີຍໜ້າທີ່, ຕໍ່ລອງຜົນປະໂຫຍດ, ຮັບສິນບົນ, ສໍ້ລາດບັງຫຼວງ,.. ປັບປຸງບັນດາອົງການລັດທີ່ເຮັດໜ້າທີ່ປົກປ້ອງກົດໝາຍໃຫ້ເຂັ້ມແຂງ ໂດຍມີການຈັດຕັ້ງທີ່ເໝາະສົມ, ມີຖັນແຖວພະນັກງານທີ່ມີລະດັບວິຊາສະເພາະ, ມີຄວາມຮັບຜິດຊອບ, ມີຄວາມທ່ຽງທຳໃນການປະຕິບັດໜ້າທີ່ສົມທົບຢ່າງສົມເຫດສົມຜົນ ລະຫວ່າງການດໍາເນີນຄະດີຜ່ານລະບົບຂະບວນການຍຸຕິທຳກັບການໄກ່ເກ່ຍຢູ່ຂັ້ນຮາກຖານ, ປັບປຸງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານໃຫ້ເຂັ້ມແຂງ. ປັບປຸງກົນໄກປະສານງານລະຫວ່າງອົງການລັດຂັ້ນທ້ອງຖິ່ນກັບການເຄື່ອນໄຫວຂອງໜ່ວຍສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງໃຫ້ຈະແຈ້ງ ເພື່ອເພີ່ມທະວີການຄຸ້ມຄອງລັດ-ຄຸ້ມຄອງສັງຄົມຕາມກົດໝາຍ ແລະ ແກ້ໄຂບັນຫາຕົວຈິງຂອງປະຊາຊົນ.

4.2. **ແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນ:**

ຄະນະພັກ, ອໍານາດການປົກຄອງແຕ່ລະຂັ້ນ ຕ້ອງສ້າງເງື່ອນໄຂ ແລະ ເອື້ອອໍານວຍຄວາມສະດວກ ໃຫ້ຫຼາຍຂຶ້ນກວ່າເກົ່າເພື່ອໃຫ້ແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນສາມາດເຄື່ອນໄຫວຕາມພາລະບົດບາດ ແລະ ຈັດຕັ້ງປະຕິບັດບັນດາເນື້ອໃນຄາດໝາຍສູ້ຊົນ ທີ່ກອງປະຊຸມໃຫຍ່ຂອງອົງການຈັດຕັ້ງເຫຼົ່ານັ້ນວາງອອກ ໃຫ້ປະກົດຜົນເປັນຈິງ. ໜ້າທີ່ຈຸດສຸມຂອງອົງການແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນໃນຊຸມປີຕໍ່ໜ້າ ແມ່ນປຸກລະດົມສະມາຊິກຂອງຕົນເຂົ້າຮ່ວມຢ່າງຕັ້ງໜ້າໃນການຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນໃນແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ເຂົ້າຮ່ວມຂະບວນການຫັນລົງສູ່ຮາກຖານຈັດຕັ້ງປະຕິບັດແຜນການ, ໂຄງການ ແລະ ມາດຕາການທີ່ຂະແໜງການຂອງຕົນວາງອອກ ໃຫ້ເກີດໝາກເກີດຜົນຕົວຈິງ. ພ້ອມກັນນັ້ນ, ແຕ່ລະອົງການຈັດຕັ້ງມີໜ້າທີ່ສຶກສາອົບຮົມ, ປຸກລະດົມມະຫາຊົນເຂົ້າຮ່ວມຢ່າງເປັນເຈົ້າການໃນການແກ້ໄຂບັນດາປະກົດການຫຍໍ້ທໍ້ໃນສັງຄົມ, ສ້າງສັງຄົມໃຫ້ມີຄວາມສາມັກຄີເປັນປຶກແຜ່ນ, ມີຄວາມເຊື່ອໝັ້ນຕໍ່ການນໍາພາຂອງພັກ, ຕິດຕາມກວດກາປະກອບຄວາມຄິດຄວາມເຫັນໃນການປັບປຸງການຈັດຕັ້ງ, ແບບແຜນວິທີເຮັດວຽກຂອງບັນດາອົງການຈັດຕັ້ງພັກ, ລັດກໍ່ຄືຕໍ່ພະນັກງານ, ສະມາຊິກພັກ.

5. **ວຽກງານພົວພັນ ແລະ ຮ່ວມມືກັບຕ່າງປະເທດ:**

ສືບຕໍ່ຮັກສາ ແລະ ເພີ່ມທະວີການພົວພັນສະໜິດແໜ້ນກັບບັນດາແຂວງ ແລະ ນະຄອນ ໂດຍສະເພາະແມ່ນຢູ່ພາກກາງ ແລະ ພາກໃຕ້ຂອງ ສ.ສ ຫວຽດນາມ, ປະສານສົມທົບ ແລະ ມີການປຶກສາຫາລືກັບບັນດາແຂວງຂອງປະເທດເພື່ອນບ້ານ ທີ່ມີຊາຍແດນຕິດຈອດກັບແຂວງອັດຕະປືໃຫ້ປົກກະຕິ ເພື່ອມີຄວາມເປັນເອກະພາບໃນການຄຸ້ມຄອງ, ການກວດກາລາດຕາເວນ ແລະ ການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນຮ່ວມກັນ. ເອົາໃຈໃສ່ການກໍ່ສ້າງ ແລະ ຍົກລະດັບພະນັກງານທີ່ເຮັດໜ້າທີ່ພົວພັນກັບຕ່າງປະເທດ, ກໍາແໜ້ນລະບຽບກົດໝາຍ, ຮຽນຮູ້ປະເພນີປະຕິບັດການພົວພັນກັບຕ່າງປະເທດ, ອໍານວຍຄວາມສະດວກ ແລະ ສ້າງບັນຍາກາດອັນດີໃນການພົວພັນຮ່ວມມື, ການລົງທຶນ, ການທ່ອງທ່ຽວ.

## ພາກທີ III
## ຍົກສູງຄວາມສາມາດນໍາພາຂອງຄະນະພັກແຕ່ລະຂັ້ນ, ປັບປຸງ ແລະ ກໍ່ສ້າງພັກໃຫ້ເຂັ້ມແຂງ, ໜັກແໜ້ນ.

ການກໍ່ສ້າງ ແລະ ປັບປຸງພັກ ໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນໄປ ພ້ອມໆກັບການຍົກສູງຄວາມສາມາດໃນການນໍາພາຂອງຄະນະພັກແຕ່ລະຂັ້ນມີຄວາມສໍາຄັນ ແລະ ຕັດສິນຜົນສໍາເລັດຂອງການຈັດຕັ້ງປະຕິບັດບັນ ດາຄາດໝາຍສູ້ຊົນ ແລະ ທິດທາງໜ້າທີ່ທີ່ກອງປະຊຸມໃຫຍ່ຄັ້ງນີ້ວາງອອກ. ບົນຈິດໃຈດັ່ງກ່າວ ໃນຊຸມປີຕໍ່ໜ້າຕ້ອງສຸມໃສ່ປະຕິບັດວຽກງານກໍ່ສ້າງພັກ-ພະນັກງານຢູ່ ແຂວງອັດຕະປື ຂອງພວກເຮົາ ເຊິ່ງມີເນື້ອໃນຕົ້ນຕໍ ດັ່ງຕໍ່ ໄປນີ້:

1. **ຍົກສູງຄຸນນະພາບຂອງວຽກງານການເມືອງ-ນໍາພາແນວຄິດ:** ຄະນະພັກແຕ່ລະຂັ້ນຕ້ອງສູ້ຊົນນໍາພາ ເພື່ອເຮັດໃຫ້ພະນັກງານ, ສະມາຊິກພັກເຊື່ອມຊຶມ ແນວທາງແຜນນະໂຍບາຍລວມຂອງພັກ, ເຫັນແຈ້ງທ່າແຮງບົ່ມຊ້ອນ, ໂອກາດ ແລະ ເງື່ອນໄຂເອື້ອອໍານວຍຄຽງຄູ່ກັບການເຫັນໄດ້ຄວາມຫຍຸ້ງຍາກ, ສິ່ງທ້າທາຍທີ່ຕ້ອງໄດ້ຜ່ານຜ່າພ້ອມທັງກໍາແໜ້ນຄາດໝາຍສູ້ຊົນ, ທິດທາງ-ໜ້າທີ່ໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ໂດຍສະເພາະແມ່ນຕໍ່ຂົງເຂດທີ່ຕົນຮັບຜິດຊອບ ເພື່ອຫັນໃຫ້ເປັນແຜນການໂຄງການ ແລະ ມາດຕາການຈັດຕັ້ງປະຕິບັດຢູ່ຂະແໜງການຂອງຕົນຢ່າງຖືກຕ້ອງ, ເປັນລະບົບແຕ່ຫົວທີ, ເອື້ອອໍານວຍໃຫ້ການຈັດຕັ້ງປະຕິບັດມີຄວາມສະດວກ ແລະ ປະກົດຜົນເປັນຈິງ.

ສົມທົບການເຜີຍແຜ່, ຄົ້ນຄວ້າເຊື່ອມຊຶມມະຕິ, ຄໍາສັ່ງ ກັບການກໍາແໜ້ນສະພາບແນວຄິດ, ການເມືອງຂອງຖັນແຖວພະນັກງານ, ສະມາຊິກ ພັກ ແລະ ຂອງປະຊາຊົນໂດຍສະເພາະແມ່ນໃນຂົງເຂດ ຫຼື ຂົງເຂດທີ່ຄະນະພັກແຕ່ລະບ່ອນຮັບຜິດຊອບນໍາພາ ເພື່ອກໍານົດເນື້ອໃນ, ວິທີການນໍາພາດ້ານແນວຄິດ, ອະທິບາຍບັນຫາຕ່າງໆ ໃຫ້ທຸກເປົ້າໝາຍເຂົ້າໃຈ ແລະ ມີຄວາມອຸ່ນອ່ຽນເຊື່ອໝັ້ນ ທັງປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບສຸກ.

- **ການນໍາພາແນວຄິດ** ຕ້ອງຕິດພັນກັບຂະບວນການທີ່ເກີດຂຶ້ນ, ປົ່ນອ້ອມການຈັດຕັ້ງປະຕິບັດບັນດາໂຄງການລົງທຶນ, ໂຄງການພັດທະນາ ຕ່າງໆໃຫ້ພະນັກງານ, ສະມາຊິກພັກ ແລະ ປະຊາຊົນເຫັນໄດ້ຜົນປະໂຫຍດ ຂອງໂຄງການເຫຼົ່ານັ້ນ, ປຸກລະດົມໃຫ້ເຂົາເຈົ້າເຂົ້າຮ່ວມໃນຂະບວນການຕົວຈິງ ແລະ ຍົກສະຕິເປັນເຈົ້າປົກປ້ອງຜົນປະໂຫຍດອັນຊອບທໍາຂອງຕົນ, ຂອງທ້ອງຖິ່ນ ແລະ ຂອງຊາດຢ່າງຖືກຕ້ອງ ແລະ ເຂັ້ມແຂງ.

2. **ປັບປຸງການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ:** ທຸກການເຄື່ອນໄຫວບູລະນະດ້ານການຈັດຕັ້ງ, ການສັບຊ້ອນພະນັກງານເຂົ້າໃນກົງຈັກ ຕ້ອງປະຕິບັດຕາມບັນດາຫຼັກການຈັດຕັ້ງເຄື່ອນໄຫວຂອງພັກ ໂດຍສະ ເພາະ ແມ່ນຫຼັກການລວມສູນປະຊາທິປະໄຕ, ຄວາມສາມັກຄີເປັນເອກະພາບ, ການຕິຊົມຕົນເອງ ແລະ ຕິຊົມກັນ ເຮັດໃຫ້ຄະນະພັກແຕ່ລະຂັ້ນກາຍເປັນລວມໝູ່ນໍາພາ ທີ່ມີຄວາມເຂັ້ມແຂງ, ເປັນໃຈກາງໃນການເຕົ້າໂຮມຄວາມສາມັກຄີພາຍໃນ ແລະ ທົ່ວສັງຄົມ; ແກ້ໄຂຂາດຕົວຕໍ່ປະກົດການຫຍໍ້ທໍ້ໃນກົງຈັກແຕ່ລະຂັ້ນ ເຊັ່ນ: ແຕກແຍກຄວາມສາມັກຄີຢູ່ພາຍໃນ, ປະກົດການພະນັກງານເຈົ້າໜ້າທີ່ຂອງລັດໃຊ້ອໍານາດ, ໜ້າທີ່ຫາຜົນປະໂຫຍດບໍ່ຊອບທໍານັບທັງການລະເມີດກົດໝາຍ, ປະກົດການກົດໜ່ວງຖ່ວງດຶງເອກະສານເພື່ອຕໍ່ລອງຜົນປະໂຫຍດທີ່ບໍ່ຊອບທໍາ, ເຮັດໃຫ້ກົງຈັກມີ ຄວາມເຂັ້ມແຂງ, ມີຄວາມປອດໃສຂາວສະອາດ, ສ້າງຄວາມເຊື່ອໝັ້ນ ແລະ ການສະ ໜັບສະໜູນອັນແຂງແຮງຈາກປະຊາຊົນ.

ດໍາເນີນການກວດກາຕີລາຄາຄືນຄຸນນະພາບຂອງຜູ້ນໍາພາ-ຜູ້ຮັບ ຜິດຊອບຢູ່ແຕ່ລະບ່ອນ, ແຕ່ລະຂັ້ນ ເພື່ອມີມາດຕາການປັບປຸງແກ້ໄຂບັນຫາທີ່ຄ້າງຄາຂອງໝູ່ຄະນະນໍາ ຫຼື ຂອງບຸກຄົນຜູ້ນໍາພາ, ຖ້າຈໍາເປັນກໍ່ຕັດສິນໃຈປັບປຸງສັບຊ້ອນຄືນໃໝ່ໃຫ້ແທດເໝາະກວ່າເກົ່າ, ໃຫ້ກົງຈັກມີຄຸນນະພາບສູງຂຶ້ນກວ່າເກົ່າ ແລະ ມີຄວາມສັກສິດກວ່າເກົ່າ. ປະຕິບັດການແບ່ງງານ-ແບ່ງຄວາມຮັບຜິດຊອບຢູ່ພາຍໃນໃຫ້ຈະແຈ້ງ, ປະຕິບັດລະບອບປະຊຸມ ແລະ ຍົກສູງຄຸນນະພາບຂອງການປະຊຸມ ໂດຍເລັ່ງໃສ່ຄົ້ນຄວ້າຫາທາງອອກໃນການແກ້ໄຂບັນຫາຕົວຈິງ; ປະຕິບັດລະບອບສ່ອງແສງລາຍງານ ແລະ ການປະສານງານຕ່າງໆຢ່າງເປັນປົກກະຕິ ແລະ ເປັນລະບົບ.

ສຸມໃສ່ປັບປຸງຄວາມເຂັ້ມແຂງໃນດ້ານການຈັດຕັ້ງ ແລະ ພະນັກງານ ຂອງບັນດາອົງການທີ່ເປັນເສນາທິການໃຫ້ຄະນະພັກ ແລະ ອໍານາດການປົກຄອງແຕ່ລະຂັ້ນ ເພື່ອຊ່ວຍຄະນະພັກ ແລະອໍານາດການປົກຄອງໃນການຕິດຕາມ, ຊຸກຍູ້ ແລະ ຊີ້ນໍາການຈັດຕັ້ງປະຕິບັດຕົວຈິງ.

3. **ວຽກງານກວດກາຂອງຄະນະພັກ:** ຄະນະພັກແຕ່ລະຂັ້ນຕ້ອງເພີ່ມທະວີການເຄື່ອນໄຫວກວດກາການ ຈັດຕັ້ງປະຕິບັດມະຕິ, ຄໍາສັ່ງຂອງພັກ-ລັດຖະບານ, ຄະນະພັກຂັ້ນຕົນ ໂດຍສຸມໃສ່ກວດກາການນໍາພາຊີ້ນໍາຂອງຄະນະພັກ ແລະ ຄະນະນໍາແຕ່ລະສະຫາຍໃນການຫັນໃຫ້ເປັນແຜນການ, ໂຄງການ ແລະ ມາດຕາການລະອຽດໃນການປະຕິບັດ, ເພື່ອໃຫ້ເກີດຜົນຕົວຈິງ. ປັບປຸງວິທີການກວດກາການກໍ່ສ້າງໜ່ວຍພັກແຂງ-ຮູ້ນໍາພາຮອບດ້ານ ເພື່ອຮັບປະກັນດ້ານຄຸນນະພາບ, ການຫັນປ່ຽນຕົວຈິງຂອງແຕ່ລະໜ່ວຍພັກ, ເຮັດໃຫ້ໜ່ວຍພັກທີ່ຮັບຮອງເປັນໜ່ວຍພັກແຂງ-ຮູ້ນໍາພາຮອບດ້ານ ໄດ້ຕາມມາດຖານທີ່ວາງອອກ ແລະ ສາມາດນໍາພາແກ້ບັນຫາຕົວຈິງແທ້.

ຕ້ອງເອົາໃຈໃສ່ຕື່ມອີກຕໍ່ການກວດກາການປະຕິບັດກົດລະບຽບ ແລະ ວິໄນຕ່າງໆຂອງພັກ, ກວດກາຕໍ່ຖັນແຖວພະນັກງານ, ສະມາຊິກພັກ ແລະ ການຈັດຕັ້ງຂອງພັກທີ່ມີປະກົດການຫຍໍ້ທໍ້ເກີດຂຶ້ນ. ສົມທົບການກວດກາພັກກັບການກວດກາລັດ, ການກວດກາຈາກຄະນະກວດກາຂັ້ນຕ່າງໆ ກັບການກວດກາຈາກອົງການຈັດຕັ້ງແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະ

ຫາຊົນ ແລະ ຈາກສັງຄົມ. ທຸກໆຜົນຂອງການກວດກາຕ້ອງໄດ້ຮັບການພິຈາລະນາແກ້ໄຂ ເພື່ອປັບປຸງພາຍໃນພັກໃຫ້ມີຄວາມປອດໃສຂາວສະອາດ ແລະ ເຂັ້ມແຂງ.

4. **ວຽກງານກໍ່ສ້າງຮາກຖານການເມືອງ ແລະ ຊີ້ນໍາການພັດທະນາຊົນນະບົດ**: ຕ້ອງສຸມໃສ່ການກໍ່ສ້າງປັບປຸງ ແລະ ຍົກສູງຄຸນນະພາບຂອງຮາກຖານພັກ ໂດຍເອົາໃຈໃສ່ກໍ່ສ້າງ, ບໍາລຸງຍົກລະດັບດ້ານການນໍາພາ ແລະ ການຄຸ້ມຄອງໃຫ້ພະນັກງານ, ສະມາຊິກພັກຢູ່ຮາກຖານ ໂດຍສະເພາະແມ່ນຜູ້ເປັນຫຼັກແຫຼ່ງຢູ່ແຕ່ລະບ່ອນໃຫ້ເປັນລະບົບສະໝໍ່າສະເໝີ ແລະ ທົ່ວເຖິງ; ຖືເອົາການກໍ່ສ້າງໜ່ວຍພັກໃຫ້ເຂັ້ມແຂງ ແລະຮູ້ນໍາພາແກ້ໄຂວຽກງານຕົວຈິງຕິດພັນກັບການຈັດຕັ້ງປະຕິບັດ 4 ເນື້ອໃນ 4 ຄາດໝາຍຂອງການສ້າງບ້ານ ແລະ ກຸ່ມບ້ານພັດທະນາເປັນໜ້າທີ່ໃຈກາງຂອງການປັບປຸງພັກຢູ່ຂັ້ນຮາກຖານ. ຄະນະພັກແຕ່ລະຂັ້ນຕ້ອງມີການຊີ້ນໍາທຸກພາກສ່ວນຢ່າງເປັນລະບົບ, ເອກະພາບ ເພື່ອຫັນສະມາຊິກພັກ, ພະນັກງານວິຊາການ, ທຶນຮອນໄປແກ້ບັນຫາທີ່ນອນໃນຂົງເຂດຂອງຕົນຢູ່ຮາກຖານ, ຮັບປະກັນໃຫ້ເກີດຂະບວນການຫັນປ່ຽນໃນໝູ່ປະຊາຊົນຢ່າງຟົດຟື້ນ, ໂສມໜ້າຂອງຊົນນະບົດ ກໍ່ມີການປ່ຽນແປງເດັ່ນຊັດ.

5. **ຍົກສູງຄຸນນະພາບຂອງການກໍ່ສ້າງ ແລະ ບໍາລຸງພະນັກງານ**: ການກໍ່ສ້າງ-ບໍາລຸງພະນັກງານຕ້ອງໄດ້ຮັບການຈັດຕັ້ງປະຕິບັດເປັນປະຈໍາ ແລະ ເປັນລະບົບ, ເຮັດໃຫ້ພະນັກງານການນໍາຫຼັກແຫຼ່ງຢູ່ຂະແໜງການ, ຢູ່ເມືອງ ແລະຢູ່ຂັ້ນຮາກຖານ ໄດ້ຮັບການກໍ່ສ້າງ ຫຼື ບໍາລຸງດ້ານທິດສະດີການເມືອງ ແລະ ການປົກຄອງຢ່າງທົ່ວເຖິງໃນລະດັບທີ່ແຕກຕ່າງກັນຕາມຄວາມເໝາະສົມຂອງເປົ້າໝາຍ. ການກໍ່ສ້າງ ແລະ ບາລຸງພະນັກງານນໍາພາ-ຄຸ້ມຄອງຕ້ອງຕິດພັນກັບແຜນກໍານົດ ແລະ ການນໍາໃຊ້ພະນັກງານຢູ່ແຕ່ລະຂັ້ນ.

ຄະນະຈັດຕັ້ງ, ຄະນະໂຄສະນາອົບຮົມ ແລະ ໂຮງຮຽນການເມືອງ-ການປົກຄອງແຂວງ ຕ້ອງປະສານສົມທົບກັນແໜ້ນເພື່ອດໍາເນີນການກໍ່ສ້າງບໍາລຸງຍົກລະດັບພະນັກງານແຕ່ລະເປົ້າໝາຍ, ສ້າງເນື້ອໃນເອກະສານທີ່ຈະສິດສອນໃຫ້ຮັບປະກັນຕາມເນື້ອໃນໂຄງການຫຼັກສູດລວມ ແລະ ບັນຫາຕົວຈິງຂອງທ້ອງຖິ່ນທີ່ຕ້ອງເຂົ້າໃຈ ເພື່ອ ເປັນບ່ອນອີງໃຫ້ຜູ້ຮຽນໄປເຄື່ອນໄຫວແກ້ບັນຫາຕົວຈິງ.

ການກໍ່ສ້າງພະນັກງານນໍາພາ-ຄຸ້ມຄອງ ແລະ ພະນັກງານວິຊາການ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດໄປພ້ອມໆກັນ ທັງສ້າງຢູ່ພາຍໃນແຂວງ, ຢູ່ພາຍໃນປະເທດ ແລະ ຢູ່ຕ່າງປະເທດ, ສືບຕໍ່ຍາດແຍ່ງການຊ່ວຍເຫຼືອທຶນການສຶກສາຈາກບັນດາແຂວງ ແລະ ນະຄອນຂອງ ສສ ຫວຽດນາມ ເພື່ອບໍາລຸງກໍ່ສ້າງຖັນແຖວພະນັກງານໃນຫຼາຍລະດັບ ແລະຫຼາຍຂົງເຂດທີ່ແຕກຕ່າງກັນ.

**ບັນດາມາດຕາການໃນການເພີ່ມທະວີການນໍາພາຂອງຄະນະພັກ:**

**1.** ຄະນະພັກແຕ່ລະຂັ້ນຕ້ອງຈັດຕັ້ງເຊື່ອມຊຶມເນື້ອໃນຂອງກອງປະຊຸມຄັ້ງນີ້ຢ່າງກວ້າງຂວາງ, ທົ່ວເຖິງ ແລະ ເລິກເຊິ່ງ; ບົນພື້ນຖານນັ້ນຊີ້ນໍາຜັນຂະຫຍາຍ ແລະ ຫັນເປັນເນື້ອໃນນໍາພາ, ເປັນແຜນການ, ໂຄງການລະອຽດໃນແຕ່ລະຂົງເຂດວຽກງານ, ບັນດາສະຫາຍໃນຄະນະປະຈໍາພັກແຂວງ ທີ່ຊີ້ນໍາແຕ່ລະຂົງເຂດ ພ້ອມກັບຄະນະພັກທີ່ຮັບຜິດຊອບຢູ່ແຕ່ລະຂະແໜງການມີຄວາມຮັບຜິດຊອບໂດຍກົງຕໍ່ຜົນໄດ້ຜົນເສຍຂອງການຈັດຕັ້ງປະຕິບັດບັນດາທິດທາງຄາດໝາຍຢູ່ໃນຂົງເຂດ ແລະ ໃນຂະແໜງການນັ້ນໆ.

**2.** ຕ້ອງມີການຕິດຕາມ, ກວດກາ, ປະເມີນຜົນ ແລະ ຊຸກຍູ້ ເປັນໄລຍະໆ ໃນເວລາຈັດຕັ້ງປະຕິບັດຕົວຈິງ. ເພື່ອເຫັນໄດ້ປັດໄຈທີ່ຄວນສົ່ງເສີມ, ບັນຫາທີ່ຍັງຄົງຄ້າງ, ຈຸດທີ່ບໍ່ທັນສອດຄ່ອງ ເພື່ອປັບປຸງແກ້ໄຂໃຫ້ທັນການ, ຍູ້ແຮງກວ່າເກົ່າການຈັດຕັ້ງປະຕິບັດຕົວຈິງ.

**3.** ພະນັກງານການນໍາແຕ່ລະສະຫາຍ, ຄະນະນໍາຢູ່ແຕ່ລະບ່ອນຕ້ອງເປັນແບບຢ່າງນໍາໜ້າໃນດ້ານຄວາມຮັບຜິດຊອບກໍ່ຄືໃນການເຄື່ອນໄຫວປະຕິບັດວຽກງານຕົວຈິງທັງເປັນຫຼັກແຫຼ່ງ, ເປັນຄັນທຸງໃນການເຕົ້າໂຮມຄວາມສາມັກຄີ, ເສີມຂະຫຍາຍກໍາລັງແຮງຂອງທຸກການຈັດຕັ້ງໃນລະບົບການເມືອງ ແລະ ກໍາລັງແຮງຂອງທົ່ວສັງຄົມ.

**ບັນດາສະຫາຍຜູ້ແທນ ແລະ ແຂກຜູ້ມີກຽດ !**

ລາຍງານການເມືອງທີ່ສະເໜີມານີ້ ແມ່ນການສ່ອງແສງໃຫ້ເຫັນ ຢ່າງລວມສູນກ່ຽວກັບສະຕິປັນຍາລວມ ໝູ່ຂອງທົ່ວພັກ-ລັດ, ທົ່ວກອງທັບ ແລະ ທົ່ວປວງຊົນບັນດາເຜົ່າພາຍໃນແຂວງອັດຕະປື ໄດ້ປະກອບຄໍາເຫັນ, ຜ່ານການຈັດສໍາມະນາ, ກອງປະຊຸມຄົບຄະນະບໍລິຫານງານພັກແຂວງຫຼາຍຄັ້ງ; ລາຍງານການເມືອງນີ້ ເປັນພື້ນຖານ ໃຫ້ແກ່ການສືບຕໍ່ພັດທະນາແຂວງອັດຕະປືໃຫ້ຫຼຸດພົ້ນຈາກຄວາມທຸກຍາກ ແລະ ດ້ອຍພັດທະນາໃນຊຸມປີຕໍ່ໜ້າ. ຂໍຮຽກຮ້ອງມາຍັງບັນດາຜູ້ແທນກອງປະຊຸມໃຫຍ່ຈົ່ງເຊີດຊູ ຄວາມຮັບຜິດຊອບຂອງຕົນຄົ້ນຄວ້າ ແລະ ປະກອບຄໍາເຫັນ ເພື່ອເຮັດໃຫ້ລາຍງານການເມືອງຄັ້ງນີ້ໄດ້ຖືກຮັບຮອງ

ແລະ ໄດ້ຈັດຕັ້ງຜັນຂະຫຍາຍລົງສູ່ຊີວິດຕົວຈິງໃນພາລາກິດປ່ຽນແປງໃໝ່ຂອງພັກເຮົາ, ເພື່ອຜົນປະໂຫຍດ ລວມ ແລະ ຄວາມຜາສຸກຂອງປະຊົນບັນດາເຜົ່າ, ໃນທົ່ວແຂວງອັດຕະປື.

**ຂໍຂອບໃຈ**